# ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ

ເດືອນ ກັນຍາ ປີ 2018

ASIAN DEVELOPMENT BANK

ADB

# ນະໂຍບາຍວ່າດ້ວຍ ການເຂົ້າເຖິງຂໍ້ມູນ

ເດືອນ ກັນຍາ ປີ 2018

ເອກະສານນີ້ຖືກເປີດເຜີຍຕໍ່ສາທາລະນະກ່ອນການພິຈາລະນາຂອງຄະນະສະພາບໍລິຫານ ຂອງ ADB ໂດຍສອດຄ່ອງກັບນະໂຍບາຍສື່ສານມວນຊົນຂອງ ADB ປີ 2011.

ASIAN DEVELOPMENT BANK

© 2018 ທະນາຄານພັດທະນາອາຊີ
**6** ຖະໜົນ ADB, ເມືອງແມນດາລູຢ່ອງ, 1550 ເຂດໂຕເມືອງນະຄອນມະນີລາ, ປະເທດຟີລິບປິນ
ໂທ +63 2 632 4444, ແຟັກ +63 2 636 2444
www.adb.org

ສະຫງວນລິຂະສິດ. ຕີພິມໃນປີ 2018.

ເລກທີເກັບມ້ຽນເອກະສານ ARM190247-3

ໃນການກຳນົດ ຫຼືການອ້າງອີງເຖິງອານາເຂດສະເພາະ ຫຼືພູມສັນຖານໃດໜຶ່ງ, ຫຼືໂດຍການໃຊ້ຄຳສັບ ປະເທດ ໃນເອກະສານສະບັບນີ້, ທະນາຄານພັດທະນາອາຊີບໍ່ມີເຈດຕະນາ ທີ່ຈະເຮັດໃຫ້ການຕັດສິນໃດໆກ່ຽວກັບ ສະຖານະພາບດ້ານກົດໝາຍ ຫຼືສະຖານະພາບອື່ນໆຂອງອານາເຂດ ຫຼືພື້ນທີ່ເຂດໃດໜຶ່ງ.

ທາງທະນາຄານພັດທະນາອາຊີສົ່ງເສີມການພິມ ຫຼືການອັດສຳເນົາຂໍ້ມູນ ໂດຍສະເພາະເພື່ອການນຳໃຊ້ສຳລັບ ສ່ວນບຸກຄົນ, ການສຶກສາແລະໃນລັກສະນະທີ່ບໍ່ແມ່ນເພື່ອເປັນທຸລະກິດ ໂດຍມີການກ່າວອ້າງອີງຄວາມຮູ້ ບຸນຄຸນເຖິງທະນາຄານພັດທະນາອາຊີ. ບັນດາຜູ້ນຳໃຊ້ຈະຖືກຈຳກັດໃນການຈຳໜ່າຍຕໍ່, ການແຈກຢາຍຊ້ຳ, ຫຼືການສ້າງເອກະສານຂຶ້ນມາໃໝ່ ໂດຍການນຳໃຊ້ເຄົ້າໂຄງເດີມຂອງເອກະສານທີ່ຖືກສ້າງມາກ່ອນແລ້ວ ເພື່ອໃຊ້ໃນຈຸດປະສົງທາງການຄ້າໂດຍປາສະຈາກການບອກກ່າວ, ຍິນຍອມເປັນລາຍລັກອັກສອນ ຈາກທະນາຄານພັດທະນາອາຊີ. ກະລຸນາຕິດຕໍ່ໄປຍັງທີ່ຢູ່ອີເມວ pubsmarketing@adb.org ຖ້າທ່ານ ມີຄຳຖາມ ຫຼື ຄຳຄິດເຫັນກ່ຽວກັບເນື້ອໃນ ຫຼືຖ້າທ່ານຕ້ອງການໄດ້ຮັບອານຸຍາດທາງດ້ານລິຂະສິດ.

ການແກ້ໄຂຕໍ່ສິ່ງພິມຂອງທະນາຄານພັດທະນາອາຊີ ທີ່ມີຄວາມຜິດພາດສາມາດເຂົ້າເບິ່ງໄດ້ທີ່ http://www.adb.org/publications/corrigenda.

ສຳລັບຂໍ້ມູນເພີ່ມຕື່ມ
ໃຫ້ຕິດຕໍ່ໜ່ວຍງານເຂົ້າຫາຂໍ້ມູນ
ຫ້ອງການເລຂາທິການ
disclosure@adb.org
www.adb.org/site/disclosure/main

ນີ້ແມ່ນສະບັບຕີພິມຂອງເອກະສານນະໂຍບາຍທີ່ໄດ້ຮັບການອະນຸມັດແລ້ວຈາກສະພາບໍລິຫານຂອງທະນາຄານ ພັດທະນາອາຊີ ໃນວັນທີ 28 ກັນຍາ 2018.

| | |
|---|---|
| **ຮອງປະທານ** | ທ່ານ ບໍາບັງ ຊູຊານໂຕໂນ, ການຄຸ້ມຄອງຄວາມຮູ້ແລະການພັດທະນາແບບຍືນຍົງ |
| **ຄະນະກໍາມະການຊີ້ນໍາ** | ທ່ານ ເນັດຊິມ ອາມັດ, ຮອງຜູ້ອໍານວຍການໃຫ່ຍ, ກົມການພັດທະນາແບບຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ<br>ທ່ານ ຊີຣິນ ຣາມິດ, ຜູ້ອໍານວຍການໃຫຍ່, ຫ້ອງການລະບົບຂໍ້ມູນຂ່າວສານແລະເຕັກໂນໂລຊີ<br>ທ່ານ ຣຸນ ກິມ, ຫົວໜ້າກົມ, ກົມອາຊີໃຕ້<br>ທ່ານ ໂຕໂມຍຸກິ ກິມຸຣະ, ຫົວໜ້າກົມ, ກົມຍຸດທະສາດ, ນະໂຍບາຍ ແລະການທົບທວນຄືນ<br>ທ່ານ ຄຣິດໂຕເຟີ ສຕີເຟັນ, ທີ່ປຶກສາທົ່ວໄປ, ຫ້ອງການທີ່ປຶກສາທົ່ວໄປ<br>ທ່ານ ວິກກີ້ ຊີແອວ ຕັນ, ຫົວໜ້າກົມ, ກົມການສື່ສານ<br>ທ່ານ ຄຣິດໂຕເຟີ ຕຽມ, ຮອງຫົວໜ້າກົມ, ກົມການດໍາເນີນງານພາກເອກກະຊົນ<br>ທ່ານ ວູຈົງ ອໍາ, ຫົວໜ້າກົມ, ກົມການພັດທະນາແບບຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ<br>ທ່ານ ອີກົວ ຊູກ້ອບ, ເລຂານຸການ, ຫ້ອງການກອງເລຂາ |
| **ຫົວໜ້າກົມ** | ທ່ານ ວິກີ້ ຊີແອວ ຕັນ, ກົມສື່ສານ |
| **ຫົວໜ້າພະແນກ** | ທ່ານ ໂອມານາ ແນ, ພະແນກສື່ມວນຊົນແລະການພົວພັນພາຍນອກ, ກົມສື່ສານ |
| **ຫົວໜ້າທີມງານ** | ທ່ານ ຄາເຣນ ເລນ, ຜູ້ຊ່ຽວຊານສະເພາະດ້ານການສື່ສານ, ກົມສື່ສານ |
| **ສະມາຊິກທີມງານ** | ທ່ານ ແມັກ ຄຣາວ, ຫົວໜ້າບັນນາທິການ, ຫ້ອງການກອງເລຂາ<br>ທ່ານ ກຸຣຸມິ ຟູກະຍະ, ຫົວໜ້າຜູ້ຊ່ຽວຊານດ້ານການປະສານງານການດໍາເນີນງານ, ກົມການດໍາເນີນງານພາກເອກກະຊົນ<br>ທ່ານ ເລັສລີ ລໍາ, ທີ່ປຶກສາ ແລະ ຫົວໜ້າ, ການພົວພັນລະຫ່ວາງອົງການ ແລະ ໜ່ວຍປະຕິບັດການພິເສດ, ກົມຍຸດທະສາດ ນະໂຍບາຍ ແລະການທົບທວນຄືນ<br>ທ່ານ ລີໄອຢາ ນາຊາເບກອບວາ, ທີ່ປຶກສາຫຼັກ, ຫ້ອງການທີ່ປຶກສາທົ່ວໄປ<br>ທ່ານ ຟຣານເຊັດໂກ ໂຕເມຣີ, ຜູ້ຊ່ຽວຊານດ້ານການພັດທະນາສັງຄົມ, ກົມອາຊີໃຕ້<br>ທ່ານ ແພັດທຣິກ ເວີເມດສ, ຜູ້ຊ່ຽວຊານດ້ານເຕັກໂນໂລຊີຂໍ້ມູນຂ່າວສານ, ຫ້ອງການລະບົບຂໍ້ມູນຂ່າວສານແລະເຕັກໂນໂລຊີ<br>ທ່ານ ນິກ ແອງເຈີໂຣ ວິລາລູດສ, ວິຊາການສື່ສານ, ກົມສື່ສານ |

ໃນການກະກຽມແຜນງານ ຫຼື ຍຸດທະສາດຂອງປະເທດໃດໜຶ່ງ, ການຈັດຫາທຶນໃຫ້ໂຄງການໃດໜຶ່ງ, ຫຼື ການກໍານົດ ຫຼື ການອ້າງອີງເຖິງອານາເຂດສະເພາະໃດໜຶ່ງ ຫຼື ເຂດພູມສາດໃດໜຶ່ງໃນເອກະສານນີ້, ທະນາຄານພັດທະນາອາຊີບໍ່ມີເຈດຕະນາຕັດສິນໃດໆກ່ຽວກັບສະຖານະພາບທາງດ້ານກົດໝາຍ ຫຼື ສະຖານະພາບອື່ນໆຂອງອານາເຂດ ຫຼື ເຂດໃດໜຶ່ງ.

# ສາລະບານ


ຕົວອັກສອນຫຍໍ້ v

I. ຄວາມເປັນມາ 1

II. ພາກສະເໜີກ່ຽວກັບນະໂຍບາຍ 6

III. ຫຼັກການຊີ້ນຳນະໂຍບາຍ ແລະ ຂໍ້ຍົກເວັ້ນ 7

A. ຫຼັກການຊີ້ນຳນະໂຍບາຍ 7
B. ເງື່ອນໄຂຂໍ້ຍົກເວັ້ນຕໍ່ການເປີດເຜີຍຂໍ້ມູນ 9
C. ການລົ້ມເລີກຜົນປະໂຫຍດທີ່ມີຕໍ່ສາທາລະນະ (ການລົ້ມເລີກໃນທາງບວກ) 13
D. ອະພິສິດຂອງ ADB ຕໍ່ ການຈຳກັດການເຂົ້າເຖິງ (ການລົ້ມເລີກໃນທາງລົບ) 13
E. ຂໍ້ມູນທີ່ເປັນປະຫວັດສາດ 14

IV. ການຮ້ອງຂໍຂໍ້ມູນ ແລະ ການອຸທອນ 15

A. ການຮ້ອງຂໍຂໍ້ມູນ 15
B. ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ 16
C. ການອຸທອນ 16
D. ສາຍພົວພັນຂອງນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນກັບນະໂຍບາຍອື່ນໆ 18
E. ການທົບທວນຄືນກ່ຽວກັບການປະຕິບັດຕາມນະໂຍບາຍ 18

V. ການຕິດຕາມກວດກາ ແລະ ການດັດແກ້ນະໂຍບາຍ 19

VI. ມື້ມີຜົນບັງຄັບໃຊ້ນະໂຍບາຍ 20

# ຕົວອັກສອນຫຍໍ້

| | | |
|---|---|---|
| ADB | – | ທະນາຄານພັດທະນາອາຊີ |
| AIC | – | ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ |
| AIP | – | ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ |
| IAP | – | ຄະນະອິດສະຫຼະຊີ້ນຳການອຸທອນ |
| PCP | – | ນະໂຍບາຍສື່ສານມວນຊົນ |
| US | – | ສະຫະລັດ |

# I. ຄວາມເປັນມາ

1. ນະໂຍບາຍສື່ສານມວນຊົນປີ 2011 (PCP) ຂອງ ທະນາຄານພັດທະນາອາຊີ (ADB) ໄດ້ຖືກອະນຸມັດໂດຍຄະນະສະພາບໍລິຫານໃນວັນທີ 25 ຕຸລາ 2011 ແລະ ມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 2 ເມສາ 2012. ການທົບທວນຄືນຄັ້ງນີ້ໄດ້ດໍາເນີນການໂດຍອີງຕາມເງື່ອນໄຂໃນນະໂຍບາຍດັ່ງກ່າວ.

2. **ຂະບວນການທົບທວນຄືນ.** ການທົບທວນຄືນນະໂຍບາຍສື່ສານມວນຊົນ ໄດ້ເລີ່ມຂຶ້ນໃນເວລາທີ່ມີການຈັດ ຕັ້ງຄະນະກໍາມະການຊີ້ນໍາຂຶ້ນໃນ ເດືອນ ກໍລະກົດ ປີ 2016 ເພື່ອໃຫ້ແນວທາງດ້ານຍຸດທະສາດຕໍ່ຂະບວນການທົບທວນຄືນດັ່ງກ່າວ. ໃນປີ 2016, ADB ໄດ້ດໍາເນີນສຶກສາດ້ານເອກະສານນະໂຍບາຍສື່ສານມວນຊົນ ແລະດໍາເນີນການປະເມີນນະໂຍບາຍຂອງບັນດາທະນາຄານເພື່ອການພັດທະນາຫຼາຍຝ່າຍອື່ນໆ, ຕາມດ້ວຍການປຶກສາຫາລືພາຍໃນ. ເວັບໄຊສໍາລັບການທົບທວນຄືນນະໂຍບາຍສື່ສານມວນຊົນໄດ້ຖືກສ້າງຂຶ້ນ ຊຶ່ງຮ່າງເອກະສານຂອງການປຶກສາຫາລືສະບັບທໍາອິດກ່ຽວກັບນະໂຍບາຍໃໝ່ທີ່ຖືກສະເໜີ ພ້ອມທັງການຈັດວາງວິທີການໃນການຈັດຕັ້ງປະຕິບັດນະໂຍ ບາຍໃໝ່ນັ້ນໄດ້ເອົາມາລົງເຜີຍແຜ່ໃນເວັບໄຊດັ່ງກ່າວໃນ ເດືອນ ພະຈິກ ປີ 2016 ເພື່ອຮັບຄໍາຄິດເຫັນຈາກມວນຊົນ.[1] ADB ໄດ້ຈັດກອງປະຊຸມປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງພາຍນອກຂຶ້ນໃນເດືອນ ທັນວາ ປີ 2016 ແລະ ໃນເດືອນ ມິຖຸນາ-ກໍລະກົດ ປີ 2017 ໃນ 16 ປະເທດ ແລະ 1 ພາກພື້ນ.[2] ຮ່າງເອກະສານຂອງການປຶກສາຫາລືສະບັບທີສອງໄດ້ເອົາລົງໃນເວັບໄຊ ໃນເດືອນ ກຸມພາ ປີ 2018. ໄດ້ມີການປຶກສາຫາລືບໍ່ເປັນທາງການກັບຄະນະສະພາບໍລິຫານຂອງ ADB ໃນເດືອນ ເມສາ ປີ 2017 ແລະ ເດືອນ ເມສາ ປີ 2018. ໃນເດືອນ ກໍລະກົດ ປີ 2018, ນະໂຍບາຍທີ່ເປັນເອກະສານທໍາການໄດ້ເອົາລົງໃນເວັບໄຊ ແລະ ສົ່ງໃຫ້ຄະນະສະພາບໍລິຫານ.

3. **ການທົບທວນຄືນນະໂຍບາຍ.** ການທົບທວນຄືນນະໂຍບາຍໄດ້ໃຫ້ເຫັນວ່າ ບັນດາຫຼັກການຊີ້ນໍາ ແລະ ເງື່ອນໄຂຂໍ້ຍົກເວັ້ນຕໍ່ການເປີດເຜີຍຕ່າງໆໃນນະໂຍບາຍສື່ສານ

[1] ADB. 2016. ການທົບທວນຄືນນະໂຍບາຍສື່ສານມວນຊົນ. https://www.adb.org/site/disclosure/pcp-review.

[2] ບັນດາປະເທດທີ່ໄດ້ໃຫ້ການປຶກສາຫາລືໂດຍລຽງຕາມລໍາດັບ: ບັງກລາເທດ, ເນປານ, ຟີລິບປິນ, ຕາຈິກິດສະຖານ, ໄທ, ກໍາປູເຈຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຫວຽດນາມ, ການາດາ, ສະຫະລັດອາເມຣິກາ, ເອີຣົບ (ຈາກ ເຢຍລະມັນ), ອິດສຕາລີ, ຕີມໍແລັດສເຕ, ຟີຈີ, ອິນເດຍ, ອາແຊັກໄບຊານ, ແລະ ຈໍເຈຍ.

ມອນຊິນແມ່ນສອດຄ່ອງກັນກັບນະໂຍບາຍ ຂອງບັນດາທະນາຄານເພື່ອການພັດທະນາຫຼາຍຝ່າຍອື່ນໆ ແລະ ໃນຫຼາຍໆປະເທດ. ນອກຈາກນັ້ນ, ຍັງພົບວ່າ ທະນາຄານເພື່ອການພັດທະນາຫລາຍຝ່າຍອື່ນໆ ກຳລັງເລີ່ມຫັນປ່ຽນໄປໃຊ້ນະໂຍບາຍທີ່ອີງໃສ່ຫຼັກການ, ຊຶ່ງປະຈຸບັນຖືວ່າເປັນແນວທາງການປະຕິບັດທີ່ດີທີ່ສຸດສຳລັບການເປີດເຜີຍຂໍ້ມູນ. ຍິ່ງໄປກວ່ານັ້ນ, ການປະເມີນການຈັດຕັ້ງປະຕິບັດນະໂຍບາຍສື່ສານມອນຊິນປະຈຳປີໄດ້ສະແດງໃຫ້ເຫັນວ່າ ເອກະສານທີ່ຖືກເປີດເຜີຍໃນເວັບໄຊຂອງ ADB (www.adb.org) ມີຈຳນວນເພີ່ມຂຶ້ນ. ເຖິງຢ່າງໃດກໍ່ຕາມ, ການປະເມີນຍັງພົບວ່າ ການເປີດເຜີຍເອກະສານມີຄວາມຊັກຊ້າໃນບາງຄັ້ງ, ເນື່ອງຈາກວ່າ ພະນັກງານຍັງກຳບໍ່ທັນແໜ້ນກ່ຽວກັບຂໍ້ກຳນົດຂອງການເປີດເຜີຍ ໂດຍສະເພາະແມ່ນປະເພດຂອງຜະລິດຕະພັນ ຫຼື ເອກະສານທີ່ນຳສະເໜີຕັ້ງແຕ່ນະໂຍບາຍສື່ສານມອນຊິນໄດ້ຮັບການອະນຸມັດໃນປີ 2011 ແລະບໍ່ໄດ້ຂຽນໄວ້ໃນນະໂຍບາຍດັ່ງກ່າວ.

4. ການທົບທວນຍັງພົບວ່າ ຂະບວນການຮ້ອງຂໍຂໍ້ມູນ ແລະ ການອຸທອນແມ່ນເຮັດໄດ້ດີ. ໃນປີ 2017, ADB ໄດ້ຮັບຄຳຮ້ອງຂໍຂໍ້ມູນທີ່ເປັນທາງການຈຳນວນ 3.653 ສະບັບ, ຊຶ່ງເພີ່ມຂຶ້ນຢ່າງບໍ່ຄາດຄິດຈາກທີ່ໄດ້ຮັບ 230 ສະບັບໃນປີ 2012.[3] ໃນປີ 2017, ADB ສາມາດຕອບຮັບ 81% ຂອງຄຳຮ້ອງພາຍໃນ 5 ມື້ ແລະ ຕອບກັບໄດ້ 96% ພາຍໃນກຳນົດເວລາ 20 ມື້. ມີຄຳຮ້ອງຂໍຂໍ້ມູນ 7 ສະບັບທີ່ຖືກປະຕິເສດ, ໃນນັ້ນ 6 ສະບັບແມ່ນການຂໍຂໍ້ມູນດ້ານການເງິນທີ່ເປັນຄວາມລັບກ່ຽວກັບການອອກພັນທະບັດ. ມີການຍື່ນອຸທອນ 1 ກໍລະນີ ໃນປີ 2017 ແລະ ກໍ່ເຊັ່ນກັນໃນປີ 2016.[4]

5. **ການປ່ຽນແປງຂອງນະໂຍບາຍທີ່ໄດ້ຮັບການສະເໜີ.** ນະໂຍບາຍສື່ສານມອນຊິນນຳໃຊ້ແນວທາງປະຕິບັດທີ່ອີງໃສ່ກົດລະບຽບຕໍ່ການເປີດເຜີຍຂໍ້ມູນ, ຊຶ່ງມັນໄດ້ໃຫ້ຂໍ້ແນະນຳລະອຽດທີ່ກວມເອົາກໍລະນີແລະເຫດການຕ່າງໆທີ່ຄາດວ່າຈະເກີດຂຶ້ນໃຫ້ໄດ້ຫຼາຍທີ່ສຸດ ໂດຍມີການກຳນົດໄວ້ລ່ວງໜ້າເຖິງບັນດາເງື່ອນໄຂຂໍ້ຍົກເວັ້ນໃນການເປີດເຜີຍ ພ້ອມທັງໄລຍະເວລາທີ່ໄດ້ບັນຍັດໄວ້ຢ່າງເຄັ່ງຄັດ. ນະໂຍບາຍທີ່ອີງໃສ່ກົດລະບຽບຄຸ້ມຄອງການເປີດເຜີຍຂໍ້ມູນໂດຍນຳໃຊ້ແນວ ທາງຂອງການແບ່ງປັນຂໍ້ມູນທີ່ເຂັ້ມງວດ. ແນວໃດກໍ່ຕາມ ການດຳເນີນງານຂອງ ADB ກຳລັງມີການປ່ຽນແປງເນື່ອງຈາກວ່າ ADB ຕ້ອງໄດ້ປັບຕົວໃຫ້ເຂົ້າກັບຄວາມຕ້ອງການຂອງພາກພື້ນທີ່ມີການປ່ຽນແປງຢ່າງໄວວາ. ນະໂຍບາຍການເປີດເຜີຍຂໍ້ມູນຂອງ ADB ຈຳເປັນຕ້ອງໃຫ້ແທດເໝາະກັບວິວັດທະນາການທີ່ເກີດຂຶ້ນຢ່າງໄວວານີ້. ແນວທາງປະຕິບັດທີ່ອີງໃສ່ກົດລະບຽບ ສ່ວນຫຼາຍແລ້ວ ຈະເຄັ່ງຄັດເກີນໄປ ທີ່ຈະສາມາດປັບປ່ຽນໄດ້ໄວພໍກັບການປ່ຽນແປງ, ຊຶ່ງບາງຄັ້ງມັນກໍ່ສົ່ງຜົນທີ່ບໍ່ສອດຄ່ອງກັບວັດຖຸປະສົງ ຂອງນະໂຍບາຍ

[3] ADB. 2017. ບົດລາຍງານການຈັດຕັ້ງປະຕິບັດນະໂຍບາຍສື່ສານມອນຊິນປະຈຳປີ 2017. https://www.adb.org/sites/default/files/institutional-document/424291/pcp-annual-report-2017.pdf

[4] https://www.adb.org/site/disclosure/pcp-implementation/appeals/appeals-received

ທີ່ໄດ້ວາງໄວ້ເຊັ່ນ: ການສັນນິຖານວ່າການເປີດເຜີຍແມ່ນເປັນປະໂຫຍດ ແລະ ການແລກປ່ຽນຂໍ້ມູນທີ່ທັນການ ແມ່ນພຽງພໍທີ່ຈະຊ່ວຍໃຫ້ຜູ້ມີສ່ວນກ່ຽວ ຂ້ອງສາມາດປະກອບສ່ວນແລະໃຫ້ຄໍາຄິດເຫັນທີ່ເປັນປະໂຫຍດໄດ້.

6. ສະນັ້ນ ແລະ ເພື່ອໃຫ້ສອດຄ່ອງກັບສະຖາບັນທີ່ຢູ່ໃນສະຖານະດຽວກັນ, ADB ໄດ້ສະເໜີຂອບນະໂຍບາຍເປີດເຜີຍທີ່ມີສອງພາກຄື: (i) ນະໂຍບາຍທີ່ອີງໃສ່ຫຼັກການທີ່ຖືກອະນຸມັດໂດຍສະພາບໍລິຫານຂອງ ADB ດັ່ງທີ່ໄດ້ສະເໜີໄວ້ໃນເອກະສານສະບັບນີ້; ແລະ (ii) ການຈັດວາງວິທີການຢ່າງລະອຽດໃນການຈັດຕັ້ງປະຕິບັດທີ່ໄດ້ຖືກອະນຸມັດໂດຍຄະນະບໍລິຫານ ແລະ ໄດ້ເປີດເຜີຍຕໍ່ສາທາລະນະໃນ ຄູ່ມືການດໍາເນີນງານຂອງ ADB ໂດຍອີງໃສ່ລະບຽບຂັ້ນຕອນຕາມປົກກະຕິຂອງ ADB.

7. ແນວທາງປະຕິບັດທີ່ອີງໃສ່ຫຼັກການທີ່ມີປະສິດທິພາບ ແມ່ນຮຽກຮ້ອງໃຫ້ມີຫຼັກການທີ່ຊັດເຈນ ແລະ ມີການສື່ສານທີ່ຫ້າວຫັນແລະ ເປັນການຮ່ວມມືລະຫວ່າງ ADB ແລະພາກສ່ວນກ່ຽວຂ້ອງຂອງADB. ມັນຍັງຮຽກຮ້ອງໃຫ້ມີການຝຶກອົບຮົມ ແລະ ການປູກຈິດສໍານຶກໃຫ້ແກ່ພະນັກງານແລະຄູ່ຮ່ວມມືເປັນປະຈໍາ, ພ້ອມທັງໃຫ້ມີຂະບວນການການອຸທອນທີ່ຈະແຈ້ງເພື່ອຮັບປະກັນວ່າ ຫຼັກການຕ່າງໆຖືກປະຕິບັດຕາມຢ່າງເໝາະສົມ, ຕໍ່ເນື່ອງແລະ ດ້ວຍຄວາມບໍລິສຸດໃຈ. ການຕິດຕາມແລະລາຍງານຢ່າງຫ້າວຫັນ ລວມທັງການລາຍງານໃຫ້ແກ່ສະພາບໍລິຫານ ຍັງແມ່ນສິ່ງທີ່ຈໍາເປັນທີ່ຈະເຮັດໃຫ້ແນ່ໃຈວ່າ ບັນດາຫຼັກການຂອງນະໂຍບາຍໄດ້ຮັບການປະຕິບັດຕາມຢ່າງມີປະສິດທິພາບ ແລະ ຢ່າງຕໍ່ເນື່ອງ. ນະໂຍບາຍ, ການຈັດວາງວິທີການໃນການຈັດຕັ້ງປະຕິບັດ, ບົດລາຍງານການຕິດຕາມກວດກາ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ຈະສືບຕໍ່ເອົາລົງໃນເວັບໄຊດຽວຂອງ ADB.[5]

8. ນະໂຍບາຍທີ່ໄດ້ສະເໜີ ແມ່ນເນັ້ນໃສ່ຫຼັກການ, ຊຶ່ງຊີ້ນໍາໂດຍຫຼັກການທີ່ຄອບຄຸມອັນໃໝ່ທີ່ວ່າ ການເປີດເຜີຍທີ່ຊັດເຈນ, ທັນການ ແລະ ເໝາະສົມ. ສໍາລັບຫຼັກການອື່ນໆສ່ວນຫຼາຍແລ້ວແມ່ນບໍ່ມີການປ່ຽນແປງຈາກນະໂຍບາຍສື່ສານມວນຊົນ ແລະຢູ່ບົນພື້ນຖານຂອງການສັນນິຖານທີ່ວ່າ ການເປີດເຜີຍ ແມ່ນເປັນປະໂຫຍດ ໂດຍມີຂໍ້ຍົກເວັ້ນທີ່ຈໍາກັດ. ໃນຕໍ່ໜ້າ, ໃນຂະນະທີ່ບັນດາຫຼັກການຂອງນະໂຍບາຍ ຈະຄົງຢູ່ຈົນກວ່າຈະມີການປ່ຽນແປງໂດຍສະພາບໍລິຫານ ແຕ່ການຈັດວາງວິທີການໃນການຈັດຕັ້ງປະຕິບັດແມ່ນສາມາດປັບປຸງໄດ້ຕາມຄວາມຈໍາເປັນ ເພື່ອໃຫ້ສອດຄ່ອງກັບຜະລິດຕະພັນ ຫຼື ຂັ້ນຕອນອັນໃໝ່ ຕົວຢ່າງເຊັ່ນ: ໂດຍມີການອະນຸມັດຂອງຄະນະບໍລິຫານຂອງ ADB. ການຫັນປ່ຽນນີ້ ຄວນຈະຮັບປະກັນເຖິງຄວາມຊັດເຈນຂອງການຈັດຕັ້ງປະຕິບັດ ແລະ ຄວາມສາມາດໃນການຄາດເດົາໄດ້ຕໍ່ການເປີດເຜີຍ. ການໃຫ້ຫຼັກການຊີ້ນໍາທີ່ທັນກັບສະພາບການກ່ຽວກັບວ່າ ເອກະສານອັນໃດ ແລະ ເວລາໃດທີ່ຈໍາເປັນຕ້ອງໄດ້ເປີດເຜີຍເປັນປົກກະຕິ ແມ່ນແນ່ໃສ່ເພື່ອຊ່ວຍໃຫ້ ADB ປັບປຸງການຮັກສາເວລາແລະປະສິດທິພາບ

[5] https://www.adb.org/site/disclosure/main

ຂອງນະໂຍບາຍ. ກ່ຽວກັບການເປີດເຜີຍບົດລາຍງານການປະເມີນຜົນອິດສະຫຼະ, ການຈັດວາງວິທີການໃນການຈັດຕັ້ງປະຕິບັດ ຊຶ່ງສະທ້ອນໃຫ້ເຫັນເຖິງວິທີປະຕິບັດໃນປະຈຸບັນຕໍ່ກັບການເປີດເຜີຍບົດລາຍງານສະບັບສົມບູນ[6] ຫຼື ການຈັດວາງອື່ນໆອາດຈະຕ້ອງໃຫ້ມີໃນນະໂຍບາຍໃດໜຶ່ງທີ່ສະພາບໍລິຫານອະນຸມັດໃນຕໍ່ໜ້າ ເພື່ອການບໍລິຫານຂອງກົມປະເມີນຜົນອິດສະຫຼະຂອງ ADB.

9. ການປ່ຽນແປງອື່ນໆທີ່ຖືກສະເໜີຕ່າງຈາກນະໂຍບາຍສື່ສານມວນຊົນລວມມີ ການເອົາພາກຂໍ້ມູນຄວາມເປັນມາອອກ, ຊຶ່ງມັນໄດ້ກາຍເປັນຂໍ້ມູນທີ່ບໍ່ເໝາະສົມກັບສະພາບໃນປະຈຸບັນແລ້ວ ແລະ ພາກສື່ສານມວນຊົນຂອງ ADB. ແນວທາງການສື່ສານມວນຊົນຂອງ ADB ອະທິບາຍກ່ຽວກັບວິທີການປະຕິບັດໃນການສື່ສານທີ່ມີລັກສະນະສະຖາບັນຂອງ ADB. ວິທີການສື່ສານ ສາມາດປັບປ່ຽນໄດ້ໂດຍໄວ ຫາກມີຊ່ອງທາງການສື່ສານໃໝ່ເກີດຂຶ້ນ ແລະກຸ່ມເປົ້າໝາຍຂອງການສື່ສານຫາກມີການປ່ຽນແປງ. ເນື່ອງຈາກກິດຈະກຳເຫຼົ່ານີ້ແຕກຕ່າງຈາກບັນດາກິດຈະກຳການເປີດເຜີຍຢ່າງຊັດເຈນ ຊຶ່ງມັນຈະໄດ້ອະທິບາຍໄວ້ໃນເອກະສານອີກສະບັບໜຶ່ງ ແລະ ສາມາດເບິ່ງໄດ້ທີ່ເວັບໄຊການເຂົ້າເຖິງຂໍ້ມູນຂອງ ADB (ລຸ່ມໜ້າເຈ້ຍທີ 5).

10. ເພື່ອເປັນການກັ່ນຕອງລະອຽດແກ່ນະໂຍບາຍສື່ສານມວນຊົນ, ນະໂຍບາຍດັ່ງກ່າວໄດ້ຖືກປ່ຽນຊື່ມາເປັນ ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ. ຊື່ໃໝ່ນີ້ ສາມາດອະທິບາຍເຖິງວັດຖຸປະສົງ ຂອງນະໂຍບາຍດັ່ງກ່າວໄດ້ຢ່າງຈະແຈ້ງຂຶ້ນກ່ຽວກັບ ການເປີດເຜີຍຂໍ້ມູນຢ່າງມີຈຸດສຸມຍິ່ງຂຶ້ນ ແລະພ້ອມທັງ ການສະໜອງຂໍ້ມູນໄດ້ດີກວ່າເກົ່າ. ການປ່ຽນຊື່ນີ້ ແມ່ນສອດຄ່ອງກັບບັນດາທະນາຄານເພື່ອການພັດທະນາອື່ນໆ ໂດຍສະເພາະບັນດາທະນາຄານທີ່ມີນະໂຍບາຍທີ່ອີງໃສ່ຫຼັກການ.

11. ອີງຕາມຄຳຄິດເຫັນທີ່ໄດ້ຮັບຈາກຮ່າງເອກະສານກ່ຽວກັບການປຶກສາຫາລືສະບັບທຳອິດ ແລະ ສະບັບທີສອງ ແລະ ເອກະສານທຳການ, ເອກະສານ R (R-Paper) ນີ້ໄດ້ຖືກຮ່າງຂຶ້ນ ເພື່ອໃຫ້ສະພາບໍລິຫານຂອງ ADB ໄດ້ພິຈາລະນາ. ຖ້າໄດ້ຮັບອະນຸມັດ, ນະໂຍບາຍສະບັບໃໝ່ນີ້ຈະມີຜົນບັງຄັບໃຊ້ນັບຈາກ ວັນທີ 1 ມັງກອນ 2019 ເປັນຕົ້ນໄປ. ການຈັດວາງວິທີການໃນການຈັດຕັ້ງປະຕິບັດ ຈະໄດ້ຮັບການອະນຸມັດຈາກຄະນະບໍລິຫານຂອງ ADB ແລະ ມີຜົນບັງຄັບໃຊ້ໃນເວລາດຽວກັນກັບທີ່ນະໂຍບາຍມີຜົນບັງຄັບໃຊ້.

12. **ຊັບພະຍາກອນ.** ງົບປະມານໃນເບື້ອງຕົ້ນສຳລັບການລົງປູກຈິດສຳນຶກ ການແປພາສາ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານທັງພາຍໃນ ແລະ ພາຍນອກໄດ້ຮັບການຈັດສັນ

[6] ພາຍໃຕ້ວິທີປະຕິບັດທີ່ໃຊ້ຢູ່ໃນປະຈຸບັນ, ບົດລາຍງານການປະເມີນຜົນອິດສະຫຼະທຸກສະບັບຈະຖືກຕີພິມພາຍໃນ 14 ວັນ ພາຍຫຼັງທີ່ເຮັດສຳເລັດ ແລະ ໄດ້ຖືກແຈກຢາຍໃຫ້ແກ່ຄະນະບໍລິຫານ ແລະ ສະພາບໍລິຫານ, ຍົກເວັ້ນບົດລາຍງານການທົບທວນການປະເມີນຜົນປະຈຳປີຂອງກົມປະເມີນຜົນອິດສະຫຼະ, ຊຶ່ງຈະຖືກເປີດເຜີຍພາຍໃນ 14 ວັນ ພາຍຫຼັງທີ່ໄດ້ມີການປຶກສາຫາລືກັບສະພາບໍລິຫານແລ້ວ.

ໄວ້ໃຫ້ ເພື່ອຮັບປະກັນເຮັດໃຫ້ການລົງເຜີຍແຜ່ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນໃໝ່ນີ້ ສາມາດດຳເນີນໄປໄດ້ຢ່າງລາບລື່ນ. ຫ້ອງການກອງເລຂາທິການ ຈະມີໜ້າທີ່ຮັບຜິດຊອບ ຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ. ໄດ້ມີການ ກຳນົດເອົາພະນັກງານສອງຕຳແໜ່ງເພີ່ມເຕີມ ໜຶ່ງໃນນັ້ນແມ່ນພະນັກງານຕ່າງປະເທດ ແລະ ອີກໜຶ່ງຕຳແໜ່ງແມ່ນພະນັກງານທ້ອງຖິ່ນ ແລະທັງສອງຕຳແໜ່ງນັ້ນ ຈະໄດ້ຖືກ ມອບໝາຍໃຫ້ຮັບຜິດຊອບໃນການຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ. ຄວາມຕ້ອງການຊັບພະຍາກອນເພີ່ມເຕີມ ເພື່ອຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍການ ເຂົ້າເຖິງຂໍ້ມູນນີ້ ຈະໄດ້ຮັບການຢືນຢັນໃນເວລາທີ່ມີການກະກຽມແລະຈັດສັນງົບປະມານ ປະຈຳປີ.

# II. ພາກສະເໜີກ່ຽວກັບນະໂຍບາຍ

13. ວັດຖຸປະສົງຂອງນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນນີ້ ແມ່ນເພື່ອເພີ່ມຄວາມໄວ້ວາງໃຈຂອງຜູ້ມີສ່ວນກ່ຽວຂ້ອງ ຕໍ່ກັບທະນາຄານພັດທະນາອາຊີ (ADB) ແລະ ເພື່ອເພີ່ມທະວີຜົນກະທົບຕໍ່ກັບການພັດທະນາ ຈາກບັນດາກິດຈະກໍາຕ່າງໆຂອງ ADB. ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນນີ້ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ADB ໃນດ້ານຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງໃນກິດຈະກໍາການພັດທະນາຕ່າງໆທີ່ໄດ້ຮັບການຊ່ວຍເຫຼືອຈາກ ADB ໃນຂົງເຂດອາຊີ ແລະ ປາຊີຟິກ. ນະໂຍບາຍນີ້ ຍັງໄດ້ຮັບຮູ້ເຖິງສິດຂອງປະຊາຊົນໃນການຊອກຫາ, ຮັບ ແລະ ສົ່ງຂໍ້ມູນ ກ່ຽວກັບການດໍາເນີນງານຂອງ ADB.

14. ນະໂຍບາຍນີ້ ໃຊ້ໄດ້ກັບເອກະສານ ແລະ ຂໍ້ມູນຕ່າງໆທີ່ ADB ຜະລິດ, ຜູ້ກູ້ຢືມ ຫຼື ລູກຄ້າຂອງ ADB ຮຽກຮ້ອງໃຫ້ຜະລິດ ຫຼື ພາກສ່ວນອື່ນໆຜະລິດ ແລະ ສະໜອງໃຫ້ແກ່ ADB ຕະຫຼອດໄລຍະການດໍາເນີນງານຂອງ ADB. ນະໂຍບາຍນີ້ ຈະໄດ້ຮັບການຈັດຕັ້ງປະຕິບັດຕາມການຈັດວາງຢ່າງລະອຽດທີ່ໄດ້ຮັບອະນຸມັດໂດຍຄະນະບໍລິຫານຂອງ ADB ແລະ ໄດ້ເຜີຍແຜ່ຕໍ່ສາທາລະນະ ໂດຍອີງຕາມຂັ້ນຕອນປະຕິບັດຕາມປົກກະຕິຂອງ ADB.[7]

---

[7] ການຈັດວາງວິທີການໃນການຈັດຕັ້ງປະຕິບັດນະໂຍບາຍຂອງ ADB ແມ່ນໄດ້ລະບຸຢູ່ພາຍໃຕ້ຂັ້ນຕອນການດໍາເນີນງານໃນຄູ່ມືການດໍາເນີນງານຂອງ ADB (ຕາມທີ່ໄດ້ດັດແກ້ເປັນແຕ່ລະໄລຍະ).

# III. ຫຼັກການຊີ້ນຳນະໂຍບາຍ ແລະ ຂໍ້ຍົກເວັ້ນ

## A. ຫຼັກການຊີ້ນຳນະໂຍບາຍ

15. ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ ແມ່ນອີງໃສ່ບັນດາຫຼັກການດັ່ງຕໍ່ໄປນີ້:

(i) **ການເປີດເຜີຍຢ່າງຊັດເຈນ, ທັນການ ແລະ ເໝາະສົມ.** ADB ເປີດເຜີຍຂໍ້ມູນກ່ຽວກັບ ການດຳເນີນງານຂອງຕົນຢ່າງຊັດເຈນ, ທັນການ ແລະ ເໝາະສົມ ເພື່ອເພີ່ມທະວີຄວາມສາມາດຂອງຜູ້ມີສ່ວນກ່ຽວຂ້ອງ ເພື່ອຈຸດປະສົງໃນການຮ່ວມມືຢ່າງມີຄວາມໝາຍກັບ ADB ແລະ ເພື່ອສົ່ງເສີມການປົກຄອງບໍລິຫານທີ່ດີ.

(ii) **ການສັນນິຖານວ່າການເປີດເຜີຍແມ່ນເປັນປະໂຫຍດ.** ADB ເປີດເຜີຍຂໍ້ມູນ ເວັ້ນແຕ່ວ່າຂໍ້ມູນນັ້ນຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນຕໍ່ການເປີດເຜີຍໃນນະໂຍບາຍນີ້.

(iii) **ຂໍ້ຍົກເວັ້ນທີ່ຈຳກັດ. ບໍ່ສາມາດເປີດເຜີຍຂໍ້ມູນຢ່າງເຕັມສ່ວນໄດ້ທຸກຄັ້ງ.** ຕົວຢ່າງ: ADB ຈຳເປັນຕ້ອງຄົ້ນຫາແນວຄິດ, ແລກປ່ຽນຂໍ້ມູນ, ຈັດຕັ້ງການສົນທະນາແບບກົງໄປກົງມາກັບປະເທດສະມາຊິກ ຫຼື ລູກຄ້າຂອງຕົນ. ໃນກໍລະນີອື່ນ, ADB ຈຳເປັນຕ້ອງພິຈາລະນາເຖິງຄວາມຕ້ອງການພິເສດຕໍ່ການດຳເນີນງານທີ່ບໍ່ແມ່ນຂອງລັດຖະບານ ຂອງຕົນ ແລະ ລູກຄ້າ,[8] ປົກປ້ອງສິດທິສ່ວນບຸກຄົນຕໍ່ຄວາມເປັນສ່ວນຕົວ ຫຼື ປົກປ້ອງຜົນປະໂຫຍດທາງທຸລະກິດທີ່ຊອບທຳຖືກຕ້ອງຕາມກົດໝາຍຂອງຕົນເອງ ແລະ ຂອງລູກຄ້າຂອງຕົນ. ນະໂຍບາຍນີ້ ມີຂໍ້ຍົກເວັ້ນທີ່ຈຳກັດບາງຈຸດ ຊຶ່ງດຸນດ່ຽງລະຫວ່າງສິດ ແລະ ຜົນປະໂຫຍດ ຂອງຫຼາຍພາກສ່ວນ. ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນ, ADB ມີສິດຍົກເລີກເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍນີ້ (ວັກທີ່ 18) ຫຼື ບໍ່ເປີດເຜີຍຂໍ້ມູນ ເຊິ່ງປົກກະຕິແລ້ວແມ່ນເປີດເຜີຍ (ວັກທີ່ 19).

(iv) **ການເປີດເຜີຍຢ່າງຈິງຈັງ.** ADB ເອົາໃຈໃສ່ໃນການແລກປ່ຽນຜະລິດຕະພັນຄວາມຮູ້ ແລະ ຂໍ້ມູນກ່ຽວກັບການດຳເນີນງານຂອງຕົນແບບທັນການຢ່າງຈິງຈັງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມໃນການຕັດສິນໃຈຂອງ ADB. ໃນຂະນະທີ່ເວັບໄຊຂອງ ADB ຍັງເປັນເວທີຕົ້ນຕໍສຳລັບການເປີດເຜີຍ

---

[8] ຂໍ້ຜູກມັດຕາມກົດໝາຍທີ່ບໍ່ໃຫ້ເປີດເຜີຍຂໍ້ມູນທາງທຸລະກິດທີ່ເປັນຄວາມລັບຂອງລູກຄ້າ ແມ່ນຂໍ້ກຳນົດມາດຕະຖານຂອງສະຖາບັນການເງິນພາກເອກະຊົນ ກໍ່ຄືຂອງຜູ້ປຽບທຽບຂອງ ADB ເພື່ອເຮັດທຸລະກິດກັບລູກຄ້າ. ຄວາມຕ້ອງການປົກປ້ອງຂໍ້ມູນທາງທຸລະກິດທີ່ເປັນຄວາມລັບ ຍັງເປັນທີ່ຍອມຮັບຢ່າງກວ້າງຂວາງໃນກົດໝາຍກ່ຽວກັບຂໍ້ມູນຂ່າວສານແບບເສລີ ເຊິ່ງລວມມີຂໍ້ຍົກເວັ້ນໃນການເປີດເຜີຍຂໍ້ມູນທາງການຄ້າທີ່ໄດ້ຮັບ ດ້ວຍຄວາມເຊື່ອໝັ້ນ.

ຢ່າງຕັ້ງໜ້າ, ADB ຍັງນຳໃຊ້ຮູບແບບອື່ນທີ່ເໝາະສົມ ເພື່ອເຜີຍແຜ່ ແລະ ສື່ສານຂໍ້ມູນ.

ປະກອບມີຂະບວນການທີ່ຄົນສ່ວນຫຼາຍ ຈະຊອກຫາ, ຮັບ ແລະ ສົ່ງຕໍ່ຂໍ້ມູນຂ່າວສານ ແລະ ແນວຄິດກ່ຽວກັບການດຳເນີນງານຂອງ ADB. ການສື່ສານ ແລະ ການແລກປ່ຽນຂໍ້ມູນທີ່ມີປະສິດທິຜົນກັບຜູ້ມີສ່ວນກ່ຽວຂ້ອງ ແມ່ນອົງປະກອບສຳຄັນຂອງການພັດທະນາທີ່ມີປະສິດທິພາບ ແລະ ແບບຍືນຍົງ.

(v) **ການສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆ.** ADB ເຮັດວຽກຢ່າງໃກ້ຊິດກັບຜູ້ກູ້ຢືມ ແລະ ລູກຄ້າຂອງຕົນເພື່ອຮັບປະກັນການສື່ສານແບບສອງທາງກ່ຽວກັບໂຄງການ ADB ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ອື່ນໆທີ່ມີສ່ວນກ່ຽວຂ້ອງ. ອັນນີ້ແມ່ນດຳເນີນພາຍໃນເວລາກຳນົດ ໂດຍນຳໃຊ້ພາສາທີ່ເໝາະສົມ[9] ແລະ ໃນລັກສະນະທີ່ຊ່ວຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ອື່ນໆທີ່ມີສ່ວນກ່ຽວຂ້ອງປະກອບສ່ວນຢ່າງມີຄວາມໝາຍໃນການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ.

(vi) **ຄວາມເປັນເຈົ້າການຂອງປະເທດ ແລະ ຂອງລູກຄ້າ.** ຜູ້ກູ້ຢືມ ແລະ ລູກຄ້າຂອງ ADB ເປັນເຈົ້າຂອງໂຄງການທີ່ ADB ໃຫ້ການສະໜັບສະໜູນ ຫຼື ລົງທຶນໃຫ້. ດັ່ງນັ້ນ, ໃນບາງກໍລະນີ ທັດສະນະຂອງຜູ້ກູ້ຢືມ ແລະ ລູກຄ້າກ່ຽວກັບເນື້ອໃນ ແລະ ການກຳນົດເວລາຂອງການເປີດເຜີຍ ຈະໄດ້ຮັບການພິຈາລະນາກ່ອນໜ້າທີ່ເອກະສານຈະຖືກເປີດເຜີຍ.

(vii) **ຂະບວນການອຸທອນທີ່ຊັດເຈນ.** ຂະບວນການອຸທອນທີ່ຊັດເຈນ ຕໍ່ການຕັດສິນໃຈຂອງ ADB ທີ່ບໍ່ເປີດເຜີຍຂໍ້ມູນທີ່ຮ້ອງຂໍມາ ແມ່ນສ່ວນສຳຄັນຂອງຂອບວຽກການເປີດເຜີຍທີ່ມີຄວາມໝາຍ.

(viii) **ການຕິດຕາມຢ່າງຕໍ່ເນື່ອງ.** ADB ຕິດຕາມກວດກາປະສິດທິພາບຂອງນະໂຍບາຍ, ຮຽນຮູ້ບົດຮຽນຈາກຜົນສຳເລັດ ແລະ ຂໍ້ບົກພ່ອງຕ່າງໆຂອງຕົນ ແລະ ໄປພ້ອມກັນກັບການປະຕິບັດແລະນຳໃຊ້ເຕັກໂນໂລຊີໃໝ່.

---

9 ຂໍ້ແນະນຳການແປພາສາຂອງ ADB ອະນຸຍາດໃຫ້ແປເອກະສານເປັນພາສາທາງການ ແລະ ພາສາປະຈຳຊາດ. ສາມາດນຳໃຊ້ພາສາທ້ອງຖິ່ນຕາມແຕ່ລະກໍລະນີ ໂດຍອີງໃສ່ການກຳນົດຂອງຫ້ອງການປະຈຳປະເທດ.

## B. ເງື່ອນໄຂຂໍ້ຍົກເວັ້ນຕໍ່ການເປີດເຜີຍ

16. ເປີດເຜີຍຂໍ້ມູນຂ່າວສານພາຍໃຕ້ການຄອບຄອງຂອງຕົນ ທີ່ບໍ່ຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍ. ເງື່ອນໄຂຂໍ້ຍົກເວັ້ນຕ່າງໆ ແມ່ນອີງໃສ່ການກຳນົດຂອງຊຶ່ງການເປີດເຜີຍຂໍ້ມູນບາງປະເພດ ອາດເຮັດໃຫ້ເກີດຜົນເສຍຫາຍ ຫຼື ເສຍຜົນປະໂຫຍດໃຫ້ແກ່ພາກສ່ວນສະເພາະໃດໜຶ່ງ ເຊິ່ງການເປີດເຜີຍຈະມີຜົນເສຍຫາຍຫຼາຍກວ່າມີຜົນປະໂຫຍດ. ການປະເມີນຜົນເສຍຫາຍທຽບກັບຜົນປະໂຫຍດ ແມ່ນຂັ້ນຕອນການຊັ່ງຊາຜົນກະທົບທາງລົບຂອງການເປີດເຜີຍ ຕໍ່ກັບຜົນປະໂຫຍດທີ່ອາດຈະເພີ່ມຂຶ້ນຈາກການເຜີຍແຜ່. ໃນດ້ານຫຼັກການຂອງການເປີດເຜີຍຂອງ (ວັກທີ່ 15) ໂດຍສະເພາະແມ່ນຂໍ້ສັນນິຖານສຳລັບການເປີດເຜີຍເຊັ່ນ: ການປະເມີນຜົນ ແລະ ພື້ນຖານການບໍ່ເປີດເຜີຍ ແມ່ນຈຳກັດສະເພາະຕໍ່ປະເພດຂໍ້ມູນ ດັ່ງທີ່ອະທິບາຍໄວ້ໃນວັກທີ່ 17. ຖ້າຫາກເອກະສານໃດໜຶ່ງ ຫຼື ສ່ວນໃດໜຶ່ງຂອງເອກະສານຈະບໍ່ຖືກເປີດເຜີຍກໍ່ຍ້ອນວ່າ ເອກະສານ ຫລື ສ່ວນໃດສ່ວນໜຶ່ງຂອງເອກະສານດັ່ງກ່າວມີຂໍ້ມູນທີ່ຕົກຢູ່ພາຍໃຕ້ ເງື່ອນໄຂຂໍ້ຍົກເວັ້ນໃດໜຶ່ງ ຫຼື ຫຼາຍກ່ວານັ້ນໃນນະໂຍບາຍ, ຊຶ່ງຈະອ້າງອີງເຖິງເງື່ອນໄຂຂໍ້ຍົກເວັ້ນນັ້ນໆຕໍ່ກັບການທີ່ບໍ່ເປີດເຜີຍ.

17. ອີງຕາມຂໍ້ກຳນົດໃນນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ ກ່ຽວກັບການລົ້ມເລີກໃນທາງບອກ (ວັກທີ່ 18), ປະເພດຂໍ້ມູນ ຫຼື ເອກະສານທີ່ບໍ່ເປີດເຜີຍມີດັ່ງຕໍ່ໄປນີ້:

### 1. ຂະບວນການປຶກສາຫາລື ແລະ ການຕັດສິນບັນຫາ

ໂດຍປົກກະຕິແລ້ວ, ຂໍ້ມູນທີ່ແຈ້ງໃຫ້ຮູ້ກ່ຽວກັບຂະບວນການປຶກສາຫາລື ຫຼື ການຕັດສິນບັນຫາຂອງ  ຈະຖືກຍົກເວັ້ນຈາກການເປີດເຜີຍ. ເງື່ອນໄຂຂໍ້ຍົກເວັ້ນນີ້ ແມ່ນອີງໃສ່ບົນມາດຖານທີ່ວ່າ ການພິຈາລະນາ, ການແລກປ່ຽນຄຳຄິດຄຳເຫັນ ແລະ ຄຳແນະນຳຊຶ່ງມີຜົນຕໍ່ການຕັດສິນບັນຫາ ຕ້ອງເປັນອິດສະຫຼະແລະກົງໄປກົງມາ. ມາດຖານດັ່ງກ່າວປະກອບມີດັ່ງຕໍ່ໄປນີ້:

(i) ຂໍ້ມູນພາຍໃນ ຖ້າຖືກເປີດເຜີຍຈະ ຫຼື ອາດຈະເປັນການລ່ວງລະເມີດຕໍ່ຂະບວນການປຶກສາຫາລື  ແລະ ການຕັດສິນບັນຫາຂອງ  ດ້ວຍການຢັບຢັ້ງຄວາມກົງໄປກົງມາໃນການແລກປ່ຽນແນວຄິດ, ທັດສະນະ ແລະ ວິທີທາງ ແລະ ເນື່ອງດ້ວຍເຫດນັ້ນ ສິ່ງຜົນເສຍຫາຍຕໍ່ຄຸນນະພາບຂອງການຕັດສິນບັນຫາ ແລະ ຜົນໄດ້ຮັບໃຫ້ແກ່  ແລະ ຜູ້ມີສ່ວນກ່ຽວຂ້ອງ ກັບ . ຕົວຢ່າງຕ່າງໆປະກອບດ້ວຍຄຳແນະນຳ ແລະ ແນວຄິດທີ່ໄດ້ແລກປ່ຽນກັນຂອງສະມາຊິກສະພາບໍລິຫານ, ທີ່ປຶກສາຂອງຜູ້ອຳນວຍການກຸ່ມ, ສະມາຊິກຄະນະບໍລິຫານ, ພະນັກງານຂອງ  ແລະ ທີ່ປຶກສາຂອງ ADB ເຊິ່ງຕາມປົກກະຕິ ຈະມີການການປຶກສາຫາລືກັນຢູ່ແລ້ວ. ຕາມ

ປົກກະຕິແລ້ວ ADB ເປີດເຜີຍຜົນຈາກຂະບວນການຂອງການຕັດສິນບັນຫາຂອງຕົນ, ແຕ່ ອາດບໍ່ເປີດເຜີຍທຸກແນວຄິດ, ທັດສະນະ ແລະ ວິທີການຕ່າງໆທີ່ນໍາໄປສູ່ການຕັດສິນບັນຫາດັ່ງກ່າວ ຍ້ອນວ່າ ຜູ້ມີສ່ວນກ່ຽວຂ້ອງ ຈໍາເປັນຕ້ອງນໍາສະເໜີ ແລະ ແລກປ່ຽນບັນດາແນວຄິດ, ທັດສະນະ ພ້ອມທັງ ວິທີທາງດັ່ງກ່າວຢ່າງເປັນອິດສະຫຼະ.

(ii) ການດໍາເນີນການຂອງສະພາບໍລິຫານ,[10] ນອກຈາກເອກະສານຂອງສະພາບໍລິຫານ,[11]ບົດບັນທຶກຄໍາຕໍ່ຄໍາ,[12] ບົດບັນທຶກກອງປະຊຸມສະພາບໍລິຫານ,[13] ແລະ ຂໍ້ສະຫຼຸບຂອງປະທານໃນກອງປະຊຸມສະພາບໍລິຫານຕ່າງໆ,[14] ເນື່ອງຈາກວ່າ ການເປີດເຜີຍເອກະສານດັ່ງກ່າວ ຈະເປັນການຢັບຢັ້ງການແລກປ່ຽນແນວຄິດ, ທັດສະນະ, ວິທີທາງຕ່າງໆແບບກົງໄປກົງ ລະຫວ່າງ ບັນດາສະມາຊິກຂອງສະພາບໍລິຫານ.

(iii) ຂໍ້ມູນຂ່າວສານທີ່ໄດ້ແລກປ່ຽນ, ໄດ້ກະກຽມ ຫຼື ໄດ້ຖອດຖອນມາຈາກຂະບວນການຂອງການປຶກສາຫາລື ແລະ ການຕັດສິນບັນຫາ ລະຫວ່າງ ແລະ ປະເທດສະມາຊິກຂອງຕົນ ແລະ ນິຕິບຸກຄົນອື່ນໆທີ່ ຮ່ວມມືນໍາ. ຖ້າຖືກເປີດເຜີຍ, ຂໍ້ມູນນີ້ຈະ ຫຼື ອາດຈະສົ່ງຜົນຕໍ່ຄວາມສັດຊື່ໃນຂະບວນການຂອງການປຶກສາຫາລື ແລະ ການຕັດສິນບັນຫາ ລະຫວ່າງ ແລະ ປະເທດສະມາຊິກຂອງ ຫຼື ນິຕິບຸກຄົນອື່ນໆທີ່ ຮ່ວມມືນໍາ ໂດຍການຢັບຢັ້ງການແລກປ່ຽນແນວຄິດ,

---

10 ການດໍາເນີນການຂອງສະພາບໍລິຫານ ແມ່ນຖືເປັນຄວາມລັບ ໂດຍອີງຕາມພາກທີ 9 ຂອງກົດລະບຽບການຂອງສະພາບໍລິຫານຂອງທະນາຄານພັດທະນາອາຊີ. ຈຸດປະສົງຂອງນະໂຍບາຍນີ້, ຄວາມໝາຍຂອງການດໍາເນີນການຂອງສະພາບໍລິຫານ ໝາຍເຖິງ ທຸກເອກະສານ ຫຼື ທຸກຂໍ້ມູນ ທີ່ສ້າງຂຶ້ນເພື່ອ ຫຼື ສ້າງໃນກອງປະຊຸມ ແລະ ການປຶກສາຫາລືຂອງສະພາບໍລິຫານ ຫຼື ກອງປະຊຸມສະພາບໍລິຫານຕ່າງໆ, ແລະ ປະກອບດ້ວຍເອກະສານຂອງສະພາບໍລິຫານ (ເອກະສານຕ່າງໆທີ່ໄດ້ແຈກຢາຍໃຫ້ສະພາບໍລິຫານ ເພື່ອເປັນຂໍ້ມູນ, ເພື່ອສົນທະນາ ຫຼື ເພື່ອພິຈາລະນາ) ແລະ ຂໍ້ຄວາມບັນທຶກຕ່າງໆຂອງສະພາບໍລິຫານເຊັ່ນ: ຄໍາທີ່ໄດ້ຖະແຫຼງ ຫຼື ເປັນເອກະສານໃນໄລຍະກອງປະຊຸມສະພາບໍລິຫານ ຫຼື ກອງປະຊຸມຄະນະກໍາມະການຕ່າງໆ, ບົດບັນທຶກຄໍາຕໍ່ຄໍາ, ບົດບັນທຶກກອງປະຊຸມ, ແລະ/ຫຼື ຂໍ້ສະຫຼຸບຂອງປະທານໃນກອງປະຊຸມຄະນະກໍາມະການຕ່າງໆ ແລະ ບົດບັນທຶກຄວາມຈໍາ ຫຼື ການສື່ສານອື່ນໆ ລະຫວ່າງຄະນະບໍລິຫານຂອງ ADB, ບັນດາກົມ ຫຼື ກອງເລຂາ ແລະ ຄະນະບໍລິຫານ, ຄະນະກໍາມະການສະພາບໍລິຫານຕ່າງໆ, ແລະ/ຫຼື ຫ້ອງການຜູ້ອໍານວຍກຸ່ມ ໃນທຸກຮູບແບບ ລວມທັງແບບເອເລັກໂຕຣນິກ.

11 ເວັ້ນແຕ່ຖືກຫ້າມໂດຍກໍລະນີຂໍ້ຍົກເວັ້ນໃນນະໂຍບາຍ, ເອກະສານຕ່າງໆທີ່ແຈກຢາຍໃຫ້ສະພາບໍລິຫານເພື່ອເປັນຂໍ້ມູນ ໄດ້ເອົາລົງໃນເວັບໄຊພາຍຫຼັງການແຈກຢາຍແລ້ວ. ໂດຍທົ່ວໄປແລ້ວ, ເອກະສານຕ່າງໆທີ່ໄດ້ແຈກຢາຍໃຫ້ສະພາບໍລິຫານ ເພື່ອພິຈາລະນາ ຈະເປີດເຜີຍກໍ່ຕໍ່ເມື່ອໄດ້ຮັບອະນຸມັດ ຫຼື ໄດ້ຮັບຮອງຈາກສະພາບໍລິຫານແລ້ວ.

12 ບົດບັນທຶກຄໍາຕໍ່ຄໍາຈາກກອງປະຊຸມຢ່າງເປັນທາງການຂອງສະພາບໍລິຫານ ແລະ ມີອາຍຸໄດ້ 10 ປີ ນັບແຕ່ມື້ສ້າງບົດບັນທຶກຂຶ້ນມາ, ເຊິ່ງບັນດາກອງປະຊຸມສະພາບໍລິຫານທີ່ຈັດຂຶ້ນໃນມື້ວັນທີ 2 ເດືອນເມສາ ປີ 2012 ຫຼື ຫຼັງຈາກນັ້ນ ແລະ ນັ້ນຖືວ່າຄະນະກໍາມະການຊີ້ນໍາການເຂົ້າເຖິງຂໍ້ມູນ ລົງຄວາມເຫັນແລ້ວວ່າ ບັນດາບົດບັນທຶກເຫຼົ່ານັ້ນ ບໍ່ໄດ້ບັນຈຸຂໍ້ມູນໃດໆ ຫຼື ໝາຍເຖິງອັນໃດ ທີ່ນອນຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍ.

13 ບົດບັນທຶກການປະຊຸມຂອງແຕ່ລະກອງປະຊຸມຕາມປົກກະຕິຂອງສະພາບໍລິຫານ ແມ່ນຖືກເປີດເຜີຍພາຍຫຼັງໄດ້ຮັບການອະນຸມັດຈາກ ສະພາບໍລິຫານ ແຕ່ບໍ່ເກີນ 60 ມື້ປະຕິທິນ ຫຼັງຈາກມື້ ທີ່ໄດ້ດໍາເນີນການປະຊຸມສະພາບໍລິຫານ. ອັນນີ້ແມ່ນໃຊ້ໄດ້ກັບການປະຊຸມສະພາບໍລິຫານຕ່າງໆຕາມປົກກະຕິ ທີ່ໄດ້ຈັດຂຶ້ນໃນວັນທີ 1 ເດືອນ ກັນຍາ ປີ 2005 ຫຼື ຫຼັງຈາກນັ້ນ.

14 ຂໍ້ສະຫຼຸບຂອງປະທານໃນການສົນທະນາແຕ່ລະຄັ້ງຂອງສະພາບໍລິຫານ ກ່ຽວກັບຍຸດທະສາດເພື່ອການຮ່ວມມືກັບປະເທດ ແລະ ຍຸດທະສາດການຮ່ວມມືພາກພື້ນ, ແລະ ແຕ່ລະນະໂຍບາຍ ຫຼື ຍຸດທະສາດທີ່ໄດ້ຮັບອະນຸມັດ ຫຼື ຮັບຮອງໂດຍສະພາບໍລິຫານ ໃນກອງປະຊຸມສະພາບໍລິຫານຢ່າງເປັນທາງການໃດໜຶ່ງ ແມ່ນຖືກເປີດເຜີຍພາຍໃນ 14 ມື້ ຫຼັງຈາກມື້ສຸດທ້າຍຂອງການແຈກຢາຍໃຫ້ແກ່ສະພາບໍລິຫານແລ້ວ.

ທັດສະນະ, ວິທີທາງຕ່າງໆແບບກົງໄປກົງ.

## 2. ຂໍ້ມູນທີ່ສະໜອງໃຫ້ດ້ວຍຄວາມເຊື່ອໝັ້ນ

(iv) ຂໍ້ມູນທີ່ປະເທດສະມາຊິກໃດໜຶ່ງ ຫຼື ຝ່າຍໃດໜຶ່ງສະໜອງໃຫ້ແກ່ ADB ດ້ວຍຄວາມເຊື່ອໝັ້ນ. ADB ມີໜ້າທີ່ປົກປ້ອງຂໍ້ມູນດັ່ງກ່າວ ແລະ ບໍ່ເປີດເຜີຍຂໍ້ມູນນັ້ນ ໂດຍບໍ່ໄດ້ຮັບອະນຸຍາດທີ່ຂຽນເປັນລາຍລັກອັກສອນຂອງປະເທດສະມາຊິກ ຫຼື ຝ່າຍອື່ນໆນັ້ນ.

(v) ຂໍ້ມູນທີ່ເປັນກຳມະສິດ ຫຼື ທຸກຂໍ້ມູນທີ່ຝ່າຍໃດໜຶ່ງໄດ້ສະໜອງໃຫ້ແກ່ ADB ຖ້າເປີດເຜີຍຈະ ຫຼື ອາດຈະເປັນຜົນກະທົບຢ່າງຮ້າຍແຮງຕໍ່ຜົນປະໂຫຍດທາງການຄ້າ, ຜົນປະໂຫຍດທາງການເງິນ, ຫຼື ໃນຖານະທີ່ສາມາດແຂ່ງຂັນຂອງຝ່າຍໃດໜຶ່ງ ເຊິ່ງນັ້ນເປັນແຫຼ່ງທີ່ມາຂອງຂໍ້ມູນ ຫຼື ຝ່າຍອື່ນທີ່ອາດຈະໄດ້ຮັບຜົນກະທົບຈາກການເປີດເຜີຍຂໍ້ມູນດັ່ງກ່າວ.

(vi) ຂໍ້ມູນທາງທຸລະກິດທີ່ເປັນຄວາມລັບ ຈະຢູ່ພາຍໃຕ້ຂໍ້ຕົກລົງການຮັກສາເປັນຄວາມລັບ ຫຼື ຂໍ້ຕົກລົງບໍ່ເປີດເຜີຍທີ່ ADB ໄດ້ເຂົ້າຮ່ວມກັບລູກຄ້າ ຫຼື ຝ່າຍອື່ນທີ່ກ່ຽວຂ້ອງ.

## 3. ຂໍ້ມູນສ່ວນບຸກຄົນ

(vii) ທຸກຂໍ້ມູນສ່ວນບຸກຄົນ, ຖ້າເປີດເຜີຍ ຈະ ຫຼື ອາດຈະເປັນການລະເມີດຕໍ່ສິດຜົນປະໂຫຍດສ່ວນຕົວ ທີ່ຖືກຕ້ອງຕາມກົດໝາຍຂອງບຸກຄົນທີ່ກ່ຽວຂ້ອງ, ຍົກເວັ້ນເມື່ອໄດ້ຮັບອະນຸຍາດຈາກບຸກຄົນທີ່ກ່ຽວ ຂ້ອງ ຫຼື ກົດລະບຽບຂອງ ADB. ບາງຕົວຢ່າງປະກອບມີ ຂໍ້ມູນທີ່ກ່ຽວຂ້ອງກັບຂະບວນການແຕ່ງຕັ້ງ ແລະ ການຄັດເລືອກເອົາເຂົາເຈົ້າ, ເງື່ອນໄຂການວ່າຈ້າງ, ການປະເມີນຜົນການປະຕິບັດວຽກ, ຂໍ້ມູນທາງການແພດຂອງສ່ວນບຸກຄົນ, ການສື່ສານສ່ວນຕົວ, ຂໍ້ມູນກ່ຽວກັບການດຳເນີນຄະດີ ແລະ ກົນໄກການອຸທອນຂອງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ແລະ ຂໍ້ມູນກ່ຽວກັບການສືບສວນສອບສວນ.

## 4. ຂໍ້ມູນທາງການເງິນ

(viii) ຂໍ້ມູນທາງການເງິນ, ຖ້າເປີດເຜີຍຈະ ຫຼື ອາດຈະເປັນຜົນກະທົບຢ່າງຮ້າຍແຮງຕໍ່ຜົນປະໂຫຍດດ້ານການເງິນ ຫຼື ດ້ານການຄ້າທີ່ຖືກຕ້ອງຕາມກົດໝາຍຂອງ ADB ແລະການດຳເນີນງານຂອງADB. ບາງຕົວຢ່າງປະກອບມີ ການຄາດຄະເນການກູ້ເງິນໃນອະນາຄົດຂອງ ADB, ການຄາດຄະເນດ້ານການເງິນ, ຂໍ້ມູນກ່ຽວກັບການຕັດສິນໃຈ ໃນການລົງທຶນຂອງສ່ວນບຸກຄົນສຳລັບການດຳເນີນງານຂອງຄັງເງິນ ADB, ການປະເມີນຜົນດ້ານສິນເຊື່ອ, ການວິເຄາະຄວາມໜ້າເຊື່ອຖື, ການຈັດລຳດັບດ້ານສິນເຊື່ອ, ການປະເມີນຜົນຄວາມສ່ຽງຂອງຜູ້ກູ້ຢືມຂອງຕົນ ແລະ ລູກຄ້າອື່ນໆ ແລະ

ທຸກຂໍ້ມູນຂ່າວສານທີ່ອາດມີຄວາມລະອຽດອ່ອນດ້ານເງິນທຶນ ແລະ ຕະຫຼາດການເງິນ.

(ix) ຂໍ້ມູນທາງການເງິນ, ຖ້າຖືກເປີດເຜີຍ ຈະ ຫຼື ອາດຈະເປັນຜົນກະທົບຢ່າງຮ້າຍແຮງຕໍ່ຄວາມສາມາດຂອງປະເທດສະມາຊິກໃດໜຶ່ງໃນການຄຸ້ມຄອງເສດຖະກິດຂອງຕົນ.

## 5. ການຮັກສາຄວາມປອດໄພ ແລະ ຄວາມປອດໄພ

(x) ຂໍ້ມູນ, ຖ້າຖືກເປີດເຜີຍ ຈະ ຫຼື ອາດຈະເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ, ຄວາມປອດໄພ ຫຼື ການຮັກສາຄວາມປອດໄພຂອງບຸກຄົນໃດໜຶ່ງ; ຄວາມປອດໄພ ຫຼື ການຮັກສາຄວາມປອດໄພຕໍ່ຊັບສິນຂອງ ADB; ຫຼື ເຮັດໃຫ້ມີຜົນຮ້າຍຕໍ່ການປ້ອງກັນຊາດ ຫຼື ຄວາມໝັ້ນຄົງຂອງຊາດຂອງປະເທດສະມາຊິກ.

## 6. ບັນຫາດ້ານກົດໝາຍ ແລະ ການສືບສວນສອບສວນ

(xi) ທຸກຂໍ້ມູນທີ່ຂຶ້ນກັບສິດລະຫ່ວາງ ທະນາຍຄວາມ-ລູກຄ້າ (ລວມທັງການສື່ສານເພື່ອປຶກສາກັບ ຫຼື ຈາກ ADB ຫຼື ທີ່ປຶກສາພາຍນອກດ້ານກົດໝາຍຂອງ ADB) ຫຼື ທຸກຂໍ້ມູນ, ຖ້າຖືກເປີດເຜີຍຈະ ຫຼື ອາດຈະທຳລາຍຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ລະຫ່ວາງ ທະນາຍຄວາມ-ລູກຄ້າ ຫຼື ລະເມີດກົດໝາຍທີ່ບັງຄັບໃຊ້.[15]

(xii) ຂໍ້ມູນທີ່ໄດ້ສະໜອງໃຫ້ ADB ທີ່ກ່າວຫາວ່າມີການສໍ້ໂກງ, ການສໍ້ລາດບັງຫຼວງ ຫຼື ການລະເມີດອື່ນໆ ຕໍ່ກັບນະໂຍບາຍຕ້ານການສໍ້ລາດບັງຫຼວງຂອງ ADB[16] ຫຼື ການປະພຶດຜິດຕໍ່ກົດລະບຽບການປະພຶດ; ຫຼື ທຸກການສືບສວນທີ່ກ່ຽວຂ້ອງກັບການສໍ້ໂກງ, ການສໍ້ລາດບັງຫຼວງ ຫຼື ການລະເມີດອື່ນໆຕໍ່ກັບນະໂຍບາຍຕ້ານການສໍ້ລາດບັງຫຼວງຂອງ ADB ຫຼື ການປະພຶດຜິດຕໍ່ກົດລະບຽບການປະພຶດ. ທຸກຂໍ້ມູນທີ່ກ່າວມານັ້ນ ຖ້າຖືກເປີດເຜີຍ ຈະ ຫຼື ອາດຈະເປັນສິ່ງຢືນຢັນທາງວັດຖຸທີ່ເຮັດໃຫ້ເກີດຄວາມລຳອຽງ ຕໍ່ການສືບສວນສອບສວນ ຫຼື ການຄຸ້ມຄອງດ້ານຍຸຕິທຳ; ຍົກເວັ້ນໃນກໍລະນີດຽວກັນແມ່ນ ໃນກໍລະນີທີ່ໄດ້ຮັບອະນຸຍາດໂດຍ ແລະ ສອດຄ່ອງກັບກົດລະບຽບຂອງ ADB. ຂໍ້ນີ້ຍັງໃຊ້ໄດ້ກັບບຸກຄົນທີ່ເປັນຝ່າຍກ່າວຫາ (ຜູ້ເປີດໂປງ), ເວັ້ນເສຍແຕ່ວ່າ ຜູ້ເປີດໂປງດັ່ງກ່າວ ຍິນຍອມທີ່

[15] ອັນນີ້ ອາດລວມທັງຂໍ້ຈຳກັດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ແລະ ການທະນາຄານ, ແລະ ກົດໝາຍວ່າດ້ວຍລິຂະສິດ.

[16] ADB. 2010. ການຕ້ານການສໍ້ລາດບັງຫຼວງ ແລະ ຄວາມສັດຊື່: ຂອບວຽກນະໂຍບາຍ ແລະ ຍຸດທະສາດຂອງພວກເຮົາ. ນະຄອນຫຼວງມະນີລາ. https://www.adb.org/sites/default/files/institutional-document/31317/anticorruption-integrity-policy-strategy.pdf; ແລະ ADB. 1998. ນະໂຍບາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ. ນະຄອນຫຼວງມະນີລາ. https://www.adb.org/documents/anticorruption-policy (ອາດຈະໄດ້ຮັບການດັດແກ້ເປັນແຕ່ລະໄລຍະ).

ຈະເປີດເຜີຍຕົວຕົນຂອງຕົນ ຫຼື ຍົກເວັ້ນໃນກໍລະນີທີ່ອະນຸຍາດໂດຍ ແລະ ສອດຄ່ອງກັບກົດລະບຽບຂອງ ADB.

### 7. ບົດລາຍງານການກວດສອບພາຍໃນ ແລະ ບົດລາຍງານກອງທຶນ[17]

(xiii) (a) ບົດລາຍງານການກວດສອບພາຍໃນຂອງຫ້ອງການຜູ້ກວດສອບທົ່ວໄປຂອງ ADB ຍ້ອນວ່າບົດລາຍງານດັ່ງກ່າວອາດປະກອບດ້ວຍຂໍ້ມູນທີ່ລະອຽດອ່ອນ ກ່ຽວກັບລະບົບພາຍໃນ ຊຶ່ງຝ່າຍທີ 3 ສາມາດໃຊ້ເພື່ອສ້າງຄວາມເສຍຫາຍຕໍ່ ADB; ແລະ (b) ບາງບົດລາຍງານການກວດສອບສະເພາະຂອງຜູ້ກວດສອບຈາກພາຍນອກຂອງ ADB ຕໍ່ກອງທຶນທີ່ ADB ບໍລິຫານ ໃນບ່ອນທີ່ມາດຕະຖານການກວດສອບທີ່ບັງຄັບໃຊ້ ຈຳກັດການເປີດເຜີຍບົດລາຍງານເຫຼົ່ານີ້ ແລະ ບົດລາຍງານທາງດ້ານການເງິນທີ່ກ່ຽວຂ້ອງ.[18]

## C. ເງື່ອນໄຂຂໍ້ຍົກເວັ້ນຕໍ່ການເປີດເຜີຍ

18. ພາຍໃຕ້ເງື່ອນໄຂຍົກເວັ້ນ, ADB ມີສິດທີ່ຈະເປີດເຜີຍຂໍ້ມູນທີ່ຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນຂອງການເປີດເຜີຍຂໍ້ມູນ ຖ້າ ADB ລົງຄວາມເຫັນແລ້ວວ່າ ຜົນປະໂຫຍດທີ່ມີຕໍ່ສາທາລະນະ (ສ່ວນລວມ) ໃນການເຜີຍແຜ່ຂໍ້ມູນນັ້ນ ມີຫຼາຍກວ່າ ເມື່ອທຽບກັບຜົນເສຍຫາຍທີ່ອາດຈະເກີດຂຶ້ນ ຍ້ອນການເປີດເຜີຍຂໍ້ມູນດັ່ງກ່າວ. ທຸກຄຳສະເໜີແນະຕໍ່ການເປີດເຜີຍ ຫຼື ການປະຕິເສດຕໍ່ການເປີດເຜີຍຂໍ້ມູນດັ່ງກ່າວ ຕ້ອງໄດ້ຮັບອະນຸມັດຈາກສະພາບໍລິຫານ ເພື່ອເປັນການບັນທຶກຂອງສະພາບໍລິຫານ ແລະ ຈາກປະທານສຳລັບເອກະສານອື່ນໆ.

## D. ອະພິສິດຂອງ ADB ຕໍ່ການຈຳກັດການເຂົ້າເຖິງ (ການລົ້ມເລີກໃນທາງລົບ)

19. ພາຍໃຕ້ເງື່ອນໄຂຍົກເວັ້ນ, ADB ຍັງມີສິດທີ່ຈະບໍ່ເປີດເຜີຍຂໍ້ມູນ ຊຶ່ງປົກກະຕິແລ້ວແມ່ນຕ້ອງເປີດເຜີຍ ຖ້າຫາກ ADB ລົງຄວາມເຫັນແລ້ວວ່າ ການເປີດເຜີຍຂໍ້ມູນດັ່ງກ່າວຈະ ຫຼື ອາດຈະພາໃຫ້ເກີດຜົນເສຍຫາຍຫຼາຍກ່ວາ ເມື່ອທຽບກັບຜົນປະໂຫຍດຈາກການເປີດເຜີຍ.

---

17 ຄຳຄິດເຫັນຂອງການກວດສອບ ແລະ ບົດລາຍງານການເງິນທີ່ໄດ້ຖືກກວດສອບແລ້ວ ໄດ້ຖືກເປີດເຜີຍຕໍ່ສາທາລະນະ ເນື່ອງຈາກມັນເປັນສ່ວນໜຶ່ງຂອງບົດລາຍງານປະຈຳປີຂອງ ADB ຈະບໍ່ຖືກລວມເຂົ້າໃນກໍລະນີຂໍ້ຍົກເວັ້ນນີ້.

18 ບາງບົດລາຍງານດ້ານການເງິນຂອງກອງທຶນທີ່ໄດ້ກະກຽມ ໂດຍສອດຄ່ອງກັບຄວາມຕ້ອງການຂອງຜູ້ໃຫ້ທຶນ (ຊຶ່ງອາດແຕກຕ່າງຈາກມາດຕະຖານການບັນຊີທີ່ຍອມຮັບໂດຍທົ່ວໄປໃນສະຫະລັດອາເມລິກາ), ແລະ ໄດ້ຮັບການກວດສອບໂດຍສອດຄ່ອງກັບມາດຕະຖານການກວດສອບທີ່ຍອມຮັບໂດຍທົ່ວໄປໃນສະຫະລັດອາເມລິກາ (ຊຶ່ງສາມາດນຳໃຊ້ໄດ້ກັບ ADB). ມາດຕະຖານການກວດສອບດັ່ງກ່າວນີ້ ຈຳກັດການເປີດເຜີຍບົດລາຍງານດ້ານການເງິນທີ່ໄດ້ກະກຽມໂດຍສອດຄ່ອງກັບມາດຕະຖານການບັນຊີອື່ນໆທີ່ບໍ່ແມ່ນມາດຕະຖານທົ່ວໄປທີ່ຍອມຮັບໄດ້ໃນສະຫະລັດອາເມລິກາ ແລະ ແນວຄວາມຄິດໃນການກວດສອບທີ່ກ່ຽວຂ້ອງກັບຜູ້ທີ່ມີຄວາມສົນໃຈສະເພາະໃນກອງທຶນເຊັ່ນ: ຜູ້ປະກອບສ່ວນ ແລະ ຜູ້ທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ/ຫຼື ການບໍລິຫານກອງທຶນ.

ມີພຽງແຕ່ສະພາບໍລິຫານເທົ່ານັ້ນທີ່ໃຫ້ອະພິສິດນີ້ໄດ້. ເກີດຂຶ້ນ ຍ້ອນການເປີດເຜີຍຂໍ້ມູນດັ່ງກ່າວ. ທຸກຄໍາສະເໜີແນະຕໍ່ການເປີດເຜີຍ ຫຼື ການປະຕິເສດຕໍ່ການເປີດເຜີຍຂໍ້ມູນດັ່ງກ່າວ ຕ້ອງໄດ້ຮັບອະນຸມັດຈາກສະພາບໍລິຫານ ເພື່ອເປັນການບັນທຶກຂອງສະພາບໍລິຫານ ແລະ ຈາກປະທານສໍາລັບເອກະສານອື່ນໆ. ຖ້າຖືກເປີດເຜີຍ, ຂໍ້ມູນນີ້ຈະ ຫຼື ອາດຈະສົ່ງຜົນຕໍ່ຄວາມສັດຊື່ໃນຂະບວນການຂອງການປຶກສາຫາລື ແລະ ການຕົກລົງບັນຫາ ລະຫ່ວາງ ADB ແລະ ປະເທດສະມາຊິກຂອງ ADB ຫຼື ນິຕິບຸກຄົນອື່ນໆທີ່ ADB ຮ່ວມມືນໍາໂດຍການຢັບຢັ້ງການແລກປ່ຽນແນວຄິດ, ທັດສະນະ, ວິທີທາງຕ່າງໆແບບກົງໄປກົງ.

## E. ຂໍ້ມູນທີ່ເປັນປະຫວັດສາດ

20. ທຸກຂໍ້ມູນກ່ຽວກັບການດໍາເນີນງານຂອງ ADB ທີ່ໄດ້ຮັກສາໄວ້ໂດຍ ADB ຜ່ານມາຫຼາຍກ່ວາ 20 ປີ ນັບແຕ່ມື້ຜະລິດຂໍ້ມູນດັ່ງກ່າວ ຫຼື ທີ່ໄດ້ສະໜອງໃຫ້ ADB ຖືວ່າເປັນຂໍ້ມູນທີ່ເປັນປະຫວັດສາດ. ບັນທຶກກອງປະຊຸມຂອງສະພາບໍລິຫານທີ່ຜ່ານມາ ສາມາດເປີດເຜີຍໄດ້ຕາມຄໍາຮ້ອງຂໍຂອງຄະນະກໍາມະການຊີ້ນໍາການເຂົ້າເຖິງຂໍ້ມູນ (AIC) ທີ່ໄດ້ລົງຄວາມເຫັນແລ້ວວ່າ ບັນທຶກກອງປະຊຸມຂອງສະພາບໍລິຫານດັ່ງກ່າວ ບໍ່ໄດ້ບັນຈຸ ຫຼື ອ້າງອີງເຖິງຂໍ້ມູນທີ່ຕົກຢູ່ພາຍໃຕ້ທຸກໆເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍ ໂດຍພິຈາລະນາເຖິງບົດບັນຍັດໃນວັກທີ່ 17.1 (ii). ທຸກຂໍ້ມູນທີ່ຜ່ານມາ ສາມາດເປີດເຜີຍໄດ້ຕາມຄໍາຮ້ອງຂໍຍົກເວັ້ນແຕ່ຂໍ້ມູນທີ່ຕົກຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນທີ່ໄດ້ລະບຸໄວ້ໃນວັກທີ່ 17.2 (ຂໍ້ມູນທີ່ໄດ້ສະໜອງໃຫ້ດ້ວຍຄວາມເຊື່ອໝັ້ນ), ວັກທີ່ 17.3 (ຂໍ້ມູນສ່ວນບຸກຄົນ), ວັກທີ່ 17.5 (ຂໍ້ມູນດ້ານການຮັກສາຄວາມປອດໄພ ແລະ ຄວາມປອດໄພ), ຫຼື ວັກທີ່ 17.6 (ດ້ານກົດໝາຍ ແລະ ດ້ານການສືບສວນ) ເຊິ່ງຍັງຕ້ອງໄດ້ຮັບການຍົກເວັ້ນຈາກການເປີດເຜີຍ.

# IV. ການຮ້ອງຂໍຂໍ້ມູນ ແລະ ການອຸທອນ

## A. ການຮ້ອງຂໍຂໍ້ມູນ

21. ທຸກຄໍາຮ້ອງຂໍຂໍ້ມູນ ແລະ ເອກະສານ ຕ້ອງໄດ້ຂຽນເປັນລາຍລັກອັກສອນ. ອາດສົ່ງຄໍາຮ້ອງຂໍໂດຍກົງເຖິງ ສໍານັກງານໃຫຍ່ຂອງ ADB, ຫ້ອງການປະຈໍາປະເທດ ຫຼື ຫ້ອງການຜູ້ຕາງໜ້າ ADB ຫຼື ກົມ ຫຼື ຫ້ອງການໃດໜຶ່ງຂອງ ADB. ລາຍລະອຽດກ່ຽວກັບບ່ອນສົ່ງຄໍາຮ້ອງຂໍຂໍ້ມູນແມ່ນຢູ່ໃນເວັບໄຊຂອງ ADB. ຄໍາຮ້ອງຂໍ ຄວນລະບຸລາຍລະອຽດສະເພາະເຈາະຈົງທີ່ເໝາະສົມ ກ່ຽວກັບຂໍ້ມູນທີ່ກໍາລັງຊອກຫາ ເພື່ອໃຫ້ ADB ສາມາດຊອກຫາຂໍ້ມູນໄດ້ພາຍໃນກໍານົດເວລາທີ່ເໝາະສົມ.

22. ອາດສົ່ງຄໍາຮ້ອງຂໍໄປຫາ ADB ເປັນພາສາອັງກິດ ຫຼື ພາສາປະຈໍາຊາດຂອງປະເທດສະມາຊິກຂອງ ADB.[19]

23. ADB ບໍ່ຈໍາເປັນຕ້ອງປະຕິບັດຕາມ ຫຼື ຕອບສະໜອງຕໍ່ຄໍາຮ້ອງຂໍທີ່ບໍ່ສະໜັບສະໜູນ, ຄໍາຮ້ອງຂໍຂໍ້ມູນກວມຫຼາຍຫົວຂໍ້ແບບລວມໆ ຫຼື ທຸກຄໍາຮ້ອງຂໍເພື່ອໃຫ້ ADB ສ້າງ, ປັບປຸງ ຫຼື ສົມທຽບຂໍ້ມູນ ຫຼື ຂໍ້ມູນຕົວເລກທີ່ຍັງບໍ່ທັນມີ ຫຼື ຍັງບໍ່ມີໃນລະບົບຄຸ້ມຄອງການບັນທຶກຂອງ ADB. ອັນນີ້ຍັງໃຊ້ກັບ ຄໍາຮ້ອງຂໍສໍາລັບຂໍ້ມູນໃນເລື່ອງດຽວກັນຈາກບຸກຄົນ, ອົງການຈັດຕັ້ງ ຫຼື ກຸ່ມດຽວກັນ ຖ້າວ່າ ADB ຫາກໄດ້ສະໜອງຂໍ້ມູນດັ່ງກ່າວໃຫ້ແລ້ວຈາກການຮ້ອງຂໍໃນຄັ້ງທີ່ຜ່ານມາ ຫຼື ໄດ້ໃຫ້ເຫດຜົນໄປແລ້ວວ່າເປັນຫຍັງຈຶ່ງບໍ່ສາມາດສະໜອງຂໍ້ມູນດັ່ງກ່າວໃຫ້ໄດ້.

24. ADB ຕອບຮັບໂດຍທັນທີ ເມື່ອໄດ້ຮັບຄໍາຮ້ອງຂໍແລ້ວ ແລະ ສື່ສານການຕັດສິນໃຈຂອງຕົນຕໍ່ຄໍາຮ້ອງຂໍດັ່ງກ່າວ.[20] ສໍາລັບຄໍາຮ້ອງທີ່ສະລັບສັບຊ້ອນ,[21] ADB ອາດຂໍຕໍ່ເວລາທີ່ກໍານົດໃນການຕອບຕໍ່ຄໍາຮ້ອງຂໍດັ່ງກ່າວ ໂດຍແຈ້ງໃຫ້ຜູ້ຮ້ອງຂໍຊາບ ແລະ ຮັບຮູ້ຕໍ່ການຕໍ່ເວລານັ້ນ.

---

19 ພາສາອັງກິດເປັນພາສາມາດຕະຖານທີ່ໃຊ້ໃນໜັງສືຕອບຮັບຂອງ ADB ຕໍ່ທຸກຄໍາຮ້ອງຂໍ. ອາດແປໜັງສືຕອບຮັບໂດຍຂຶ້ນກັບສະຖານະການຂອງທ້ອງຖິ່ນ.

20 ໃນບ່ອນທີ່ ADB ໃຊ້ອະພິສິດຂອງຕົນພາຍໃຕ້ວັກທີ 18 (ການລົ້ມເລີກໃນທາງບວກ) ຫຼື ວັກທີ 19 (ການລົ້ມເລີກໃນທາງລົບ), ADB ຈະຕິດຕໍ່ສື່ສານກັບຜູ້ຮ້ອງຂໍ ເມື່ອໄດ້ຮັບການຕັດສິນໃຈຂັ້ນສຸດທ້າຍແລ້ວ. ຜູ້ຮ້ອງຂໍຈະໄດ້ຮັບການແຈ້ງການກ່ຽວກັບການຕໍ່ເວລາຕາມຄວາມເໝາະສົມ.

21 ຄໍາຮ້ອງຂໍທີ່ສະຫລັບສັບຊ້ອນລວມທັງການຊອກຫາຂໍ້ມູນຈາກຫຼາກຫຼາຍແຫຼ່ງຂໍ້ມູນ, ເອກະສານຈໍານວນຫຼາຍທີ່ໄດ້ລວບລວມເປັນເວລາຫຼາຍປີ, ການລວບລວມ ແລະ ຄວາມກ່ຽວຂ້ອງກັບຂໍ້ມູນດິບ ແລະ ການສະໜອງສິ່ງທີ່ຄົ້ນພົບ.

## B. ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ

25. ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ (AIC) ແມ່ນອົງການຊີ້ນຳທີ່ຖືກສ້າງຕັ້ງຂຶ້ນ ເພື່ອຜັນຂະຫຍາຍ, ຕິດຕາມກວດກາ ແລະ ທົບທວນຄືນນະໂຍບາຍ ພ້ອມທັງການຈັດວາງການຈັດຕັ້ງປະຕິບັດຂອງຕົນ. ຄະນະກຳມະການຊີ້ນຳ ຈະປະກອບດ້ວຍພະນັກງານອາວຸໂສຂອງ ADB ຊຶ່ງຖືກແຕ່ງຕັ້ງໂດຍປະທານ ແລະ ລາຍງານຕໍ່ປະທານ. ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ຈະປະຊຸມກັນຕາມຄວາມຈຳເປັນ ເພື່ອທົບທວນຄືນຄຳຮ້ອງຂໍຂໍ້ມູນທີ່ໄດ້ຮັບການປະຕິເສດຈາກກົມ ຫຼື ຫ້ອງການຂອງ ADB. ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ຍັງຈະພິຈາລະນາ ແລະ ຕັດສິນກ່ຽວກັບການອຸທອນ (ວັກທີ່ 28). ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ຈະມີສິດອຳນາດໃນການ (i) ສະໜັບສະໜູນ ຫຼື ຄັດຄ້ານຕໍ່ຄຳຕັດສິນຂອງກົມ ຫຼື ຫ້ອງການ ADB ທີ່ປະຕິເສດການເຂົ້າເຖິງຂໍ້ມູນ ແລະ (ii) ພິຈາລະນາຄຳຮ້ອງຂໍຕໍ່ກັບຂໍ້ມູນ ຊຶ່ງຕົກຢູ່ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍ (ວັກທີ່ 18) ເພື່ອໃຫ້ເປີດເຜີຍ ດ້ວຍເຫດຜົນອັນນຳມາຊຶ່ງຜົນປະໂຫຍດຕໍ່ສາທາລະນະ.

## C. ການອຸທອນ

26. ADB ມີ ຂັ້ນຕອນຂອງຂະບວນການອຸທອນຢູ່ 2 ຂັ້ນ ທີ່ຜູ້ຮ້ອງຂໍສາມາດນຳໃຊ້ໃນເວລາທີ່ເຂົາເຈົ້າເຊື່ອວ່າ ADB ໄດ້ປະຕິເສດຄຳຮ້ອງຂໍຂໍ້ມູນຂອງເຂົາເຈົ້າ ເຊິ່ງເປັນການລະເມີດຕໍ່ນະໂຍບາຍນີ້. ລາຍລະອຽດກ່ຽວກັບການສົ່ງຄຳອຸທອນແມ່ນຢູ່ໃນເວັບໄຊຂອງ ADB. ການແກ້ໄຂໃຫ້ແກ່ຜູ້ຮ້ອງຂໍທີ່ມີສ່ວນໃນທຸກການອຸທອນ ແມ່ນຖືກຈຳກັດສະເພາະຕໍ່ກັບຂໍ້ມູນທີ່ໄດ້ຮັບຕາມທີ່ໄດ້ຮ້ອງຂໍມາເທົ່ານັ້ນ.

27. ຂະບວນການອຸທອນ 2 ຂັ້ນມີດັ່ງນີ້.

### 1. ດ້ານກົດໝາຍ ແລະ ການສືບສວນສອບສວນ

28. ຜູ້ຮ້ອງຂໍທີ່ຖືກ ADB ປະຕິເສດຕໍ່ການເຂົ້າເຖິງຂໍ້ມູນ ສາມາດຍື່ນອຸທອນຕໍ່ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ (AIC) ຖ້າຜູ້ຮ້ອງຂໍສາມາດ (i) ສະແດງໃຫ້ເຫັນໄດ້ວ່າ ການຮ້ອງຂໍຂໍ້ມູນໃນເບື້ອງຕົ້ນທີ່ໄດ້ສົ່ງໃຫ້ ແມ່ນສອດຄ່ອງຕາມຂັ້ນຕອນຕ່າງໆທີ່ກຳນົດໄວ້ໃນນະໂຍບາຍ ແລະ (ii) ກໍ່ເຮັດໄດ້ຄືກັນ ໂດຍໃຫ້ການຄັດຄ້ານທີ່ສົມເຫດສົມຜົນວ່າ ADB ໄດ້ລະເມີດນະໂຍບາຍ ໂດຍປະຕິເສດການເຂົ້າເຖິງຂໍ້ມູນຕາມທີ່ໄດ້ຮ້ອງຂໍມານັ້ນ ຫຼື ໃຫ້ເຫດຜົນເຖິງຜົນປະໂຫຍດທີ່ມີຕໍ່ສາທາລະນະຕາມທີ່ໄດ້ອະທິບາຍໄວ້ໃນວັກທີ່ 18 ເພື່ອລົ້ມເລີກ ຕໍ່ກັບເງື່ອນໄຂຂໍ້ຍົກເວັ້ນໃນນະໂຍບາຍ.

## 2. ຂັ້ນທີ່ສອງ: ຄະນະອິດສະຫຼະຊີ້ນຳການອຸທອນ

29. ຖ້າຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ຫາກສະໜັບສະໜູນການຕັດສິນໃຈໃນເບື້ອງຕົ້ນທີ່ໄດ້ປະຕິ ເສດຄຳຮ້ອງຂໍຂໍ້ມູນ, ແລະ ຜູ້ຮ້ອງຂໍກໍ່ຍັງເຊື່ອວ່າ ADB ໄດ້ລະເມີດນະໂຍບາຍຂອງຕົນດ້ວຍການລະງັບການສະໜອງຂໍ້ມູນຕາມທີ່ໄດ້ຮ້ອງຂໍມາດັ່ງກ່າວ, ຜູ້ຮ້ອງຂໍສາມາດຍື່ນອຸທອນຕໍ່ຄະນະອິດສະຫຼະຊີ້ນຳການອຸທອນ (IAP). ຄະນະອິດສະຫຼະຊີ້ນຳການອຸທອນ ມີສິດອຳນາດທີ່ຈະສະໜັບສະໜູນ ຫຼື ຄັດຄ້ານຕໍ່ຄຳຕັດສິນຂອງຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ. ຄຳຕັດສິນຂອງຄະນະອິດສະຫຼະຊີ້ນຳການອຸທອນ ແມ່ນເປັນຂັ້ນສຸດທ້າຍ.

30. ຄະນະອິດສະຫຼະຊີ້ນຳການອຸທອນ ບໍ່ມີສິດອຳນາດໃນການພິຈາລະນາຄຳອຸທອນກ່ຽວກັບ (i) ຄຳຕັດສິນຂອງສະພາບໍລິຫານ ຫຼື ປະທານ ຖ້າວ່າຄຳອຸທອນຫາກຢູ່ບົນເງື່ອນໄຂການລົ້ມເລີກຜົນປະໂຫຍດທີ່ມີຕໍ່ສາທາລະນະ ຫຼື (ii) ຄຳຕັດສິນຂອງສະພາບໍລິຫານ ເພື່ອທີ່ຈະນຳໃຊ້ອະພິສິດຂອງຕົນໃນການຈຳກັດການເຂົ້າເຖິງຂໍ້ມູນເຊິ່ງປົກກະຕິແລ້ວ ຈະໄດ້ຮັບການເປີດເຜີຍ.

31. ຄະນະອິດສະຫຼະຊີ້ນຳການອຸທອນ ຈະປະກອບມີຜູ້ຊ່ຽວຊານອິດສະຫຼະກ່ຽວກັບການເຂົ້າເຖິງຂໍ້ມູນ 3 ທ່ານ, ເຊິ່ງເປັນຜູ້ທີ່ເປັນອິດສະຫຼະຈາກ ADB. ປະທານ ADB ແຕ່ງຕັ້ງສະມາຊິກຄະນະອິດສະຫຼະຊີ້ນຳການອຸທອນ ດ້ວຍການອະນຸມັດຂອງສະພາບໍລິຫານ.

## 3. ການຍື່ນອຸທອນ ແລະ ການແຈ້ງການກ່ຽວກັບຄຳຕັດສິນ

32. ທຸກຄຳອຸທອນທີ່ຍື່ນຕໍ່ຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ຕ້ອງຍື່ນເປັນລາຍລັກອັກສອນພາຍໃນ 90 ມື້ປະຕິທິນ ຫຼັງຈາກຄຳຕັດສິນໃນເບື້ອງຕົ້ນຂອງ ADB ໃນການປະຕິເສດຕໍ່ການເຂົ້າເຖິງຂໍ້ມູນທີ່ໄດ້ຮ້ອງຂໍ. ໜັງສືອຸທອນທັງໝົດທີ່ສົ່ງເຖິງຄະນະອິດສະຫຼະຊີ້ນຳການອຸທອນ ຈະຕ້ອງສົ່ງເປັນລາຍລັກອັກສອນພາຍໃນ 90 ມື້ ຫຼັງຈາກຄຳຕັດສິນຂອງຄະນະກຳມະການຊີ້ນຳການເຂົ້າເຖິງຂໍ້ມູນ ທີ່ສະໜັບສະໜູນຄຳຕັດສິນໃນເບື້ອງຕົ້ນຂອງ ADB ໃນການປະຕິເສດຕໍ່ການເຂົ້າເຖິງຂໍ້ມູນ. ໜັງສືອຸທອນທີ່ໄດ້ຮັບເກີນກ່ວາ 90 ມື້ ຈະບໍ່ໄດ້ຮັບການພິຈາລະນາ. ທຸກໜັງ ສືອຸທອນຄວນປະກອບມີດັ່ງຕໍ່ໄປນີ້:

(i) ລາຍລະອຽດຂອງຂໍ້ມູນເດີມທີ່ໄດ້ຮ້ອງຂໍ, ແລະ

(ii) ຄຳອະທິບາຍເຖິງຄວາມເປັນຈິງ ແລະ ເຫດການທີ່ເກີດຂຶ້ນ ທີ່ສະໜັບສະໜູນຂໍ້ອ້າງທີ່ຜູ້ຮ້ອງຂໍອ້າງວ່າ ADB ໄດ້ລະເມີດນະໂຍບາຍ ຫຼື ອ້າງວ່າໄດ້ທຳການລົ້ມເລີກຜົນປະໂຫຍດທີ່ມີຕໍ່ສາທາລະນະ.

33. ຜູ້ຮ້ອງຂໍຈະໄດ້ຮັບການແຈ້ງໃຫ້ຊາບເຖິງການອຸທອນຖືກຍົກຟ້ອງໃນກໍລະນີທີ່ (i) ບໍ່ສາມາດທີ່ຈະຍື່ນໜັງສືອຸທອນພາຍໃນເວລາທີ່ໄດ້ກໍານົດໄວ້, (ii) ບໍ່ສາມາດທີ່ຈະສະໜອງຂໍ້ມູນທີ່ສະໜັບສະໜູນທີ່ສົມເຫດສົມຜົນຢ່າງພຽງພໍຕໍ່ການອຸທອນ, ຫຼື (iii) ຍ້ອນຄະນະກໍາມະການຊີ້ນໍາການເຂົ້າເຖິງຂໍ້ມູນ ຫຼື ຄະນະອິດສະຫຼະຊີ້ນໍາການອຸທອນບໍ່ມີສິດອໍານາດໃນການພິຈາລະນາຕໍ່ເລື່ອງທີ່ພວມຖືກອຸທອນ.

## D. ສາຍພົວພັນຂອງນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນກັບນະໂຍບາຍອື່ນໆ

34. ADB ມີ ຂັ້ນຕອນຂອງຂະບວນການອຸທອນຢູ່ 2 ຂັ້ນ ທີ່ຜູ້ຮ້ອງຂໍສາມາດນໍາໃຊ້ໃນເວລາທີ່ເຂົາເຈົ້າເຊື່ອວ່າ ADB ໄດ້ປະຕິເສດຄໍາຮ້ອງຂໍຂໍ້ມູນຂອງເຂົາເຈົ້າ ເຊິ່ງເປັນການລະເມີດຕໍ່ນະໂຍບາຍນີ້. ລາຍລະອຽດກ່ຽວກັບການສົ່ງຄໍາອຸທອນແມ່ນຢູ່ໃນເວັບໄຊຂອງ ADB. ການແກ້ໄຂໃຫ້ແກ່ຜູ້ຮ້ອງຂໍທີ່ມີສ່ວນໃນທຸກການອຸທອນ ແມ່ນຖືກຈໍາກັດສະເພາະຕໍ່ກັບຂໍ້ມູນທີ່ໄດ້ຮັບຕາມທີ່ໄດ້ຮ້ອງຂໍມາເທົ່ານັ້ນ.

## E. ການທົບທວນຄືນການປະຕິບັດຕາມນະໂຍບາຍ

35. ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນ ແມ່ນຂຶ້ນກັບຂະບວນການອຸທອນ (ວັກທີ່ 2633). ນະໂຍບາຍວ່າດ້ວຍການເຂົ້າເຖິງຂໍ້ມູນແມ່ນ ນະໂຍບາຍເພື່ອການດໍາເນີນງານໜຶ່ງທີ່ປະຕິບັດໄປຄຽງຄູ່ກັນກັບ ນະໂຍບາຍວ່າດ້ວຍກົນໄກຄວາມຮັບຜິດຊອບຂອງ ADB. ສະນັ້ນ, ຄໍາຕໍານິຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການທີ່ກ່າວຫາວ່າ ADB ລະເມີດຕໍ່ນະໂຍບາຍນີ້ ໃນການກໍານົດ, ການດໍາເນີນງານ ຫຼື ການຈັດຕັ້ງປະຕິບັດໂຄງການໃດໜຶ່ງ ຍັງສາມາດຍື່ນຄໍາຕໍານິພາຍໃຕ້ນະໂຍບາຍວ່າດ້ວຍກົນໄກຄວາມຮັບຜິດຊອບຂອງ ADB.[22]

[22] ກົນໄກຄວາມຮັບຜິດຊອບ ເປັນເວທີ ກໍ່ຄືພື້ນທີ່ສໍາລັບຜູ້ທີ່ໄດ້ຮັບຜົນກະທົບທາງລົບຈາກໂຄງການທີ່ ADB ຊ່ວຍເຫຼືອ ເພື່ອເປັນສຽງ ແລະ ຊອກຫາວິທີແກ້ໄຂບັນຫາ ແລະ ລາຍງານປະເດັນທີ່ກ່າວຫາວ່າ ບໍ່ປະຕິບັດຕາມນະໂຍບາຍ ແລະພ້ອມທັງ ຂັ້ນຕອນການດໍາເນີນງານຂອງ ADB. ADB. ກົນໄກຄວາມຮັບຜິດຊອບ. https://www.adb.org/site/accountability-mechanism/main

# V. ການຕິດຕາມກວດກາ ແລະ ການດັດແກ້ນະໂຍບາຍ

36. ADB ຈະຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ ແລະ ຈະເອົາບົດລາຍງານການກວດກາປະຈຳປີລົງໃນເວັບໄຊຂອງຕົນ. ການດັດແກ້ນະໂຍບາຍ ສາມາດເຮັດເປັນແຕ່ລະໄລຍະ ໂດຍໄດ້ຮັບອະນຸມັດຈາກສະພາບໍລິຫານ.

# VI. ມື້ມີຜົນບັງຄັບໃຊ້ນະໂຍບາຍ

37. ນະໂຍບາຍນີ້ ຈະມີຜົນບັງຄັບໃຊ້ນັບແຕ່ ວັນທີ່ 1 ເດືອນ ມັງກອນ ປີ 2019 ແລະ ນະໂຍບາຍນີ້ຈະປ່ຽນແທນ ນະໂຍບາຍສື່ສານມວນຊົນປີ 2011.

## ຂໍ້ມູນກ່ຽວກັບທະນາຄານພັດທະນາອາຊີ

ທະນາຄານພັດທະນາອາຊີ ມຸ່ງໝັ້ນທີ່ຈະບັນລຸເປົ້າໝາຍທີ່ວ່າ ໃຫ້ພາກພື້ນອາຊີ ແລະ ປາຊີຟິກມີ ຄວາມຈະເລີນຮຸ່ງເຮືອງ, ທົ່ວເຖິງ, ພ້ອມຮັບການປ່ຽນແປງ ແລະ ຍືນຍົງ, ໄປພ້ອມກັບການຮັກສາ ຄວາມພະຍາຍາມຂອງຕົນໃນການລົບລ້າງຄວາມທຸກຍາກ. ທະນາຄານພັດທະນາອາຊີ ໄດ້ຮັບ ການສ້າງຕັ້ງຂຶ້ນໃນປີ 1966, ໂດຍມີສະມາຊິກທັງໝົດ 67 ປະເທດ ໃນນັ້ນມີ 48 ປະເທດ ແມ່ນ ມາຈາກພາກພື້ນດັ່ງກ່າວ. ບັນດາເຄື່ອງມືທີ່ສໍາຄັນຕ່າງໆສໍາລັບການຊ່ວຍເຫຼືອປະເທດ ສະມາຊິກທີ່ກໍາລັງພັດທະນາຂອງທະນາຄານພັດທະນາອາຊີ ແມ່ນການປຶກສາຫາລືດ້ານ ນະໂຍບາຍ, ການໃຫ້ເງິນກູ້, ການເຂົ້າຮ່ວມລົງທຶນໃນໂຄງການ, ການຄໍ້າປະກັນ, ການໃຫ້ທຶນ ຊ່ວຍເຫຼືອລ້າ, ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ.

**ASIAN DEVELOPMENT BANK**
6 ADB Avenue, Mandaluyong City
1550 Metro Manila. Philippines
www.adb.org